ສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13-16 ຕຸລາ 2022
ປີທີ 11
ສະບັບທີ 883

## ພົບປະທາງໄກລະຫວ່າງ ປະທານຄະນະມິດຕະພາບລັດຖະສະພາລາວ-ຈີນ



(ສພຊ) ວັນທີ 13 ຕຸລາ 2022 ທີ່ສະພາແຫ່ງຊາດ ໄດ້ມີການພົບປະສອງຝ່າຍລາວ-ຈີນ ໃນຮູບແບບກອງປະຊຸມທາງໄກ ເຊິ່ງຝ່າຍລາວນຳໂດຍສະຫາຍ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ແຫ່ງ ສປປລາວ, ປະທານຄະນະມິດຕະ

ອ່ານຕໍ່ໜ້າ 2

## ກຜງສ ເຄື່ອນໄຫວຕິດຕາມກວດກາ ການປະຕິບັດວຽກງານຢູ່ແຂວງຜົ້ງສາລີ

(ສພຊ) ວັນທີ 7 ຕຸລາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ກຳມາທິການແຜນການ, ການເງິນ ແລະ ການກວດສອບ (ກຜງສ) ສະພາແຫ່ງຊາດ ໄດ້ປະຊຸມຮ່ວມກັບສະພາປະຊາຊົນແຂວງ ແລະ ພະແນກການທີ່ກ່ຽວຂ້ອງ ໂດຍການເປັນປະທານຂອງທ່ານ ລີເບີ ລີບີ໋ວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ມີທ່ານ ທອງສີ ເສົາສຸລິພົມ ປະທານ ສພຂ, ບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຕາງໜ້າປະທານອົງການກວດກາລັດແຂວງ, ຮອງປະທານຄະນະກຳມະການ ສພຂ, ຮອງເລຂາທິການ ສພຂ ແລະ ຫົວໜ້າພະແນກ



ຈາກ 9 ຂະແໜງການຂັ້ນເຂດເສດຖະກິດເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການລາຍງານຈາກທ່ານ ທອງສີ ເສົາສຸລິພົມ ກ່ຽວກັບການຕິດຕາມກວດກາ 6 ເດືອນຕົ້ນປີ ແລະ ທິດທາງ 6 ເດືອນທ້າຍປີ 2022 ຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດ

ອ່ານຕໍ່ໜ້າ 2

## ເຝິກອົບຮົມການປະເມີນຜົນການປະຕິບັດ ວຽກງານໃຫ້ພະນັກງານ-ລັດຖະກອນ



(ສພຊ) ເພື່ອເປັນການຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນ ກົມຈັດຕັ້ງ-ພະນັກງານ, ກົມທີ່ເປັນເສນາທິການໃຫ້ແກ່ຄະນະເລຂາທິການສະພາແຫ່ງຊາດ, ກຳມາທິການຕ່າງໆ ແລະ ສະຖາບັນຄົ້ນຄວ້ານິຕິກຳຂອງສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານຕົວຈິງ ກ່ຽວກັບການປະເມີນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ໃຫ້ມີປະສິດທິຜົນສູງຂຶ້ນ ໂດຍສະເພາະຄວາມຮັບຮູ້, ຄວາມເຂົ້າໃຈ ແລະ ຄວາມເປັນເອກະພາບຕໍ່ນິຕິກຳຕ່າງໆ ກ່ຽວກັບການປະເມີນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ເປັນຕົ້ນການວິເຄາະວິໄຈ ເພື່ອກຳນົດການປະເມີນ, ຂັ້ນຕອນ ຫລື ບາດກ້າວການປະເມີນ ເຊັ່ນ: ການກະກຽມ,

ອ່ານຕໍ່ໜ້າ 2

## ກປຊສ ເຄື່ອນໄຫວພົບປະກຳລັງ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ



ໜ້າ 3

## ຕິດຕາມກວດກາ ແລະ ເກັບກຳສະພາບ ການວ່າງງານ ແລະ ການສ້າງວຽກເຮັດງານທຳ

(ສພຊ) ວັນທີ 26 ກັນຍາຜ່ານມາ, ທີ່ສະພາປະຊາຊົນແຂວງບໍລິຄຳໄຊ ທ່ານ ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ເຄື່ອນໄຫວຕິດຕາມກວດກາກ່ຽວກັບວຽກງານການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ ໂດຍການຕ້ອນຮັບຂອງທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານສະພາປະຊາຊົນແຂວງ, ມີບັນດາທ່ານປະທານ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ ແລະ ພະແນກການທີ່ກ່ຽວຂ້ອງເຂົ້າຮ່ວມ.

ທັງນີ້ ເພື່ອຕິດຕາມກວດກາ ແລະ ເກັບກຳ ສະພາບການວ່າງງານຂອງແຮງງານລາວ, ການເຝິກວິຊາຊີບ, ການພັດທະນາສີມືແຮງງານ, ການສ້າງວຽກເຮັດງານທຳ, ການຈັດຫາງານ, ການຄຸ້ມຄອງ, ການປົກປ້ອງສິດຜົນປະໂຫຍດຂອງຜູ້ອອກແຮງງານ,

ອ່ານຕໍ່ໜ້າ 3

## ຮອງປະທານ ກມຍທ ຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ ຢູ່ແຂວງຫລວງນ້ຳທາ



(ສພຊ) ເພື່ອຕິດຕາມກວດກາການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ກໍຄືການເຄື່ອນໄຫວວຽກງານ ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີຂອງບັນດາອົງການໃນຂົງເຂດຍຸຕິທຳ ເພື່ອຊອກໃຫ້ເຫັນດ້ານດີ ທີ່ຄວນເສີມຂະຫຍາຍ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ຊຸກຍູ້ ໃຫ້ມີການແກ້ໄຂຕົວຈິງ ທັງ

ອ່ານຕໍ່ໜ້າ 3

## ສພຊ ປະຖົມນິເທດໃຫ້ລັດຖະກອນໃໝ່ ແລະ ລັດຖະກອນເຝິກງານ 95%

(ສພຊ) ວັນທີ 13 ຕຸລາ 2022 ທີ່ຫ້ອງປະຊຸມຂອງສະພາແຫ່ງຊາດ (ສພຊ) ນະຄອນຫລວງວຽງຈັນ ໄດ້ມີກອງປະຊຸມເຝິກອົບຮົມປະຖົມນິເທດໃຫ້ລັດຖະກອນໃໝ່ ແລະ ລັດຖະກອນເຝິກງານ 95% ຂອງ ສພຊ ໂດຍການເປັນປະທານກອງປະຊຸມຂອງທ່ານ ສີງຄຳ ວົງພະຈັນ ຮອງເລ

ອ່ານຕໍ່ໜ້າ 3





ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

ຊົມເຊີຍວັນປະກາດເອກະລາດ (12 ຕຸລາ 1945-12 ຕຸລາ 2022) ຄົບຮອບ 77 ປີ ຢ່າງສຸດໃຈ!

## ພົບປະ...



ພາບລັດຖະສະພາລາວ-ຈີນ, ຝ່າຍຈີນນຳໂດຍສະຫາຍ ປາຍ ຊຸນ ລີ ປະທານຄະນະມິດຕະພາບລັດຖະສະພາຈີນ-ລາວ, ປະທານຄະນະກຳມາທິການຊົນເຜົ່າ, ສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປຈີນ.

ໃນການພົບປະກັນໃນຄັ້ງນີ້, ແມ່ນເປັນການຈັດຕັ້ງຜັນຂະຫຍາຍຜົນການພົບປະທາງໄກ ລະຫວ່າງ ສະຫາຍ ປອ. ໄຊສົມພອນ ພົມວິຫານ ແລະ ສະຫາຍ ລີ ຈານ ຊູ ໃນເດືອນພຶດສະພາ ປີ 2021 ທີ່ຜ່ານມາ, ເປັນໂອກາດດີທີ່ຈະໄດ້ມີການປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນນຳກັນກ່ຽວກັບການຈັດຕັ້ງປະຕິບັດການຕົກລົງເປັນເອກະພາບທີ່ສຳຄັນຂອງການນຳສູງສຸດ ຂອງ ສອງພັກ, ສອງລັດ, ລົງເລິກການແລກປ່ຽນ ແລະ ຖອດຖອນບົດຮຽນ ເຊິ່ງກັນ ແລະກັນ ໃນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ຂອງສອງປະເທດ ກໍຄືບັນຫາອື່ນໆທີ່ສອງຝ່າຍມີຄວາມສົນໃຈ.

ໃນການພົບປະ, ທັງສອງຝ່າຍໄດ້ແຈ້ງໃຫ້ຮູ້ກ່ຽວກັບສະພາບການເຄື່ອນໄຫວຂອງອົງການນິຕິບັນຍັດຂອງຕົນໃຫ້ກັນ ແລະ ກັນ ຊາບໂດຍສັງເຂບ; ສະຫາຍ ສົມມາດ ພົລເສນາ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫລວງຮອບດ້ານ ທີ່ປະຊາຊົນຈີນຍາດມາໄດ້ໃນໄລຍະຜ່ານມາ ພາຍໃຕ້ການນຳພາອັນຖືກຕ້ອງ, ປະດິດສ້າງຂອງພັກກອມມູນິດຈີນ ໂດຍມີສະຫາຍເລຂາທິການໃຫຍ່ ສີ ຈິນ ຜິງ ເປັນແກນກາງ. ພິເສດ ແມ່ນການບັນລຸເປົ້າໝາຍສູ້ຊົນ 100 ປີ ເຫດການທຳອິດໃນການລຶບລ້າງຄວາມທຸກຍາກໃນຂອບເຂດທົ່ວປະເທດ ແລະ ສຳເລັດການສ້າງສັງຄົມອິ່ມໝຳສຳລານ ຢູ່ ສປຈີນ.

ໃນໄລຍະຜ່ານມາ, ການພົວພັນຮ່ວມມືແບບຄູ່ຮ່ວມຍຸດທະສາດຮອບດ້ານ, ໝັ້ນຄົງ, ຍາວນານ ແລະ ການເປັນຄູ່ຮ່ວມຊາຕາກຳ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຈີນ ພວມໄດ້ຮັບການເສີມຂະຫຍາຍ ແລະ ນຳເອົາຜົນປະໂຫຍດຕົວຈິງມາໃຫ້ປະຊາຊົນສອງປະເທດນັບມື້ນັບຫລາຍຂຶ້ນ; ໃນປີ 2021 ຜ່ານມາ ເປັນປີທີ່ມີຄວາມໝາຍສຳຄັນສຳລັບການພົວພັນຮ່ວມມືລະຫວ່າງສອງປະເທດ ເພາະເປັນປີຄົບຮອບ 60 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດລາວ-ຈີນ, ພິເສດໃນວັນທີ 4 ທັນວາ 2021 ຜ່ານມານີ້ ໄດ້ມີພິທີເປີດນຳໃຊ້ເສັ້ນທາງລົດໄຟລາວ-ຈີນ ໂດຍມີການນຳສູງສຸດຂອງສອງປະເທດເຂົ້າຮ່ວມ ເຊິ່ງເປັນເຫດການທີ່ມີຄວາມໝາຍສຳຄັນ ແລະ ເປັນສັນຍາລັກແຫ່ງການພົວພັນຮ່ວມມືລາວ-ຈີນ ທັງເປັນການສະແດງໃຫ້ເຫັນຜົນສຳເລັດຕົວຈິງ ຂອງຂໍ້ລິເລີ່ມ 1 ແລວ 1 ເສັ້ນທາງ ຂອງເລຂາທິການໃຫຍ່ ປະທານປະເທດ ສີ ຈິ້ນຜິງ ກໍຄືການຫັນປະເທດລາວ ຈາກປະເທດບໍ່ມີທາງອອກສູ່ທະເລ ເປັນປະເທດເຊື່ອມໂຍງ, ເຊື່ອມຈອດ ໃນພາກພື້ນ. ເຖິງແມ່ນວ່າສະພາບໃນພາກພື້ນ ແລະ ສາກົນ ສືບຕໍ່ມີຄວາມສັບສົນ ບວກກັບຜົນກະທົບຢ່າງໜັກໜ່ວງຈາກການລະບາດຂອງພະຍາດໂຄວິດ-19 ໃນທົ່ວໂລກ, ແຕ່ການຮ່ວມມືສອງຝ່າຍ ລາວ-ຈີນ ກໍໄດ້ຮັບການສືບຕໍ່ ໂດຍສະເພາະດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດ ຍັງສືບຕໍ່ໄດ້ຮັບການເສີມຂະຫຍາຍ ສປຈີນ ສືບຕໍ່ເປັນປະເທດລົງທຶນລາຍໃຫຍ່ອັນດັບໜຶ່ງ ໃນຈຳນວນ 53 ປະເທດ ແລະ ເຂດແຄວ້ນທີ່ມາລົງທຶນ ຢູ່ ສປປລາວ, ມາຮອດປີ 2022 ມີໂຄງການລົງທຶນທັງໝົດ 833 ໂຄງການ, ລວມມູນຄ່າ 16,4 ຕື້ໂດລາ; ນອກຈາກນັ້ນ, ຍັງໄດ້ມີການຮ່ວມມືລົງທຶນກໍ່ສ້າງຫລາຍໂຄງການສຳຄັນ ເປັນຕົ້ນ: ເຂດພັດທະນາເສດຖະກິດກອມລວມໄຊເສດຖາ, ໂຄງການປັບປຸງໂຮງໝໍມະໂຫສົດ, ໂຄງການຊ່ວຍເຫລືອແກ້ໄຂຄວາມທຸກຍາກຢູ່ທ້ອງຖິ່ນຂອງລາວ ແລະ ໂຄງການອື່ນໆທີ່ນຳໃຊ້ເງິນຊ່ວຍເຫລືອລ້າຂອງ ສປຈີນ ພວມມີຄວາມຄືບໜ້າດີ.

ໃນໄລຍະການແຜ່ລະບາດຂອງພະຍາດໂຄວິດ-19 ພັກ, ລັດ ແລະ ປະຊາຊົນຈີນອ້າຍນ້ອງ ຍັງໄດ້ໃຫ້ການຊ່ວຍເຫລືອຢ່າງທັນການ ໂດຍໄດ້ສິ່ງທີມແພດ, ອຸປະກອນການແພດ ແລະ ຢາວັກຊີນ ຈຳນວນຫລວງຫລາຍມາຊ່ວຍ ສປປລາວ ໃນໂອກາດນີ້, ສະຫາຍຮອງປະທານສະພາແຫ່ງຊາດລາວ ຕາງໜ້າສະພາແຫ່ງຊາດ ກໍຄືປະຊາຊົນລາວບັນດາເຜົ່າ ຂໍສະແດງຄວາມຂອບໃຈຢ່າງຈິງໃຈ ແລະ ຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງພັກ, ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ, ລັດຖະບານ ແລະ ປະຊາຊົນຈີນອ້າຍນ້ອງ ທີ່ໄດ້ໃຫ້ການຊ່ວຍເຫລືອອັນໃຫຍ່ຫລວງດັ່ງກ່າວ.

ການພົວພັນ ແລະ ຮ່ວມມືລະຫວ່າງ ສອງອົງການນິຕິບັນຍັດ: ສະພາແຫ່ງຊາດລາວ ແລະ ສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປຈີນ ໃນໄລຍະຜ່ານມາ ໄດ້ຮັບການເສີມຂະຫຍາຍຂຶ້ນຢ່າງບໍ່ຢຸດຢັ້ງ ແລະ ເປັນຮູບປະທຳຍິ່ງໆຂຶ້ນ; ສອງອົງການນິຕິບັນຍັດ ໄດ້ມີການແລກປ່ຽນການຢ້ຽມຢາມ, ແລກປ່ຽນບົດຮຽນ, ຮ່ວມກັນຈັດສຳມະນາ ແລະ ເຝິກອົບຮົມກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ຝ່າຍຈີນໄດ້ໃຫ້ການຊ່ວຍເຫລືອສະພາແຫ່ງຊາດລາວຕະຫລອດມາ, ມີການສະໜັບສະໜູນ ເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ. ໃນໄລຍະທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ກໍໄດ້ຈັດກອງປະຊຸມພົບປະດ້ວຍຮູບແບບທາງໄກ ໃນລະດັບປະທານສະພາ, ຮອງປະທານສະພາ ແລະ ລະດັບປະທານກຳມາທິການ ເພື່ອພ້ອມກັນຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາ ແລະ ຮ່ວມກັນປຶກສາຫາລືທິດທາງການຮ່ວມມືໃນຕໍ່ໜ້າ ພ້ອມທັງປຶກສາຫາລື ແລະ ແລກປ່ຽນບົດຮຽນ ກ່ຽວກັບການສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ກໍຄືການຟື້ນຟູເສດຖະກິດ ພາຍຫລັງການແຜ່ລະບາດຂອງພະຍາດໂຄວິດຜ່ອນຄາຍລົງ; ນອກຈາກນັ້ນ, ຍັງມີການຮ່ວມມືແລກປ່ຽນທາງດ້ານວິຊາການ ສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ໄດ້ໃຫ້ທຶນກໍ່ສ້າງເຝິກອົບຮົມ ແລະ ທັດສະນະສຶກສາ ຢູ່ ສປຈີນ ໃຫ້ແກ່ພະນັກງານຂອງສະພາແຫ່ງຊາດລາວ ໃນທ້າຍສະໄໝ ສະພາແຫ່ງຊາດຊຸດທີ VII ແລະ ຊຸດທີ VIII ຈຳນວນ 4 ຄັ້ງ ລວມທັງໝົດ 90 ສະຫາຍ ເຊິ່ງຜ່ານການເຂົ້າຮ່ວມ ເຫັນວ່າສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ບັນດາພະນັກງານລັດຖະກອນ ໄດ້ຍົກລະດັບດ້ານວິຊາສະເພາະ, ວິຊາການ ແລະ ຮັບຮູ້ເຂົ້າໃຈແຈ້ງລະບົບການເມືອງ, ການປົກຄອງ, ການພັດທະນາເສດຖະກິດ-ສັງຄົມຂອງ ສປຈີນ ເພື່ອນຳມາໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ການເມືອງຂອງຕົນ.

ໃນນາມຄະນະມິດຕະພາບລັດຖະສະພາລາວ-ຈີນ-ລາວ ທີ່ເປັນກົນໄກໜຶ່ງ ໃນການປະສານສົມທົບ ແລະ ຊຸກຍູ້ ການພົວພັນຮ່ວມມືລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາປະຊາຊົນທົ່ວປະເທດ ແຫ່ງ ສປຈີນ, ຝ່າຍລາວ ໄດ້ສະເໜີທິດທາງການພົວພັນ ແລະ ການຮ່ວມມື ຂອງສອງອົງການນິຕິບັນຍັດໃນຕໍ່ໜ້າດັ່ງນີ້: ສືບຕໍ່ຈັດຕັ້ງຜັນຂະຫຍາຍ ແຜນການສ້າງຄູ່ຮ່ວມຊະຕາກຳສັງຄົມນິຍົມລາວ-ຈີນ ໃຫ້ເປັນຮູບປະທຳ ແລະ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດລາວ-ຈີນ ໃຫ້ນັບມື້ນັບຫລາຍຂຶ້ນ; ສືບຕໍ່ຈັດຕັ້ງຜັນຂະຫຍາຍຜົນການພົບປະສອງຝ່າຍ ລະຫວ່າງສະຫາຍ ໄຊສົມພອນ ພົມວິຫານ ແລະ ສະຫາຍ ລີ ຈານ ຊູ ໃນເດືອນພຶດສະພາ 2021 ໃຫ້ເປັນອັນລະອຽດ ເຊິ່ງໃນນີ້ສະພາແຫ່ງຊາດລາວ ສະເໜີສ້າງ MOU ຮ່ວມກັບສະພາຜູ້ແທນປະຊາຊົນທົ່ວປະເທດຈີນ ເພື່ອເປັນບ່ອນອີງໃນການຊຸກຍູ້ ແລະ ສົ່ງເສີມການພົວພັນຮ່ວມມືຂອງສອງຝ່າຍ ໂດຍສະເພາະແມ່ນກົນໄກການແລກປ່ຽນການຢ້ຽມຢາມ ເຊິ່ງກັນ ແລະກັນ ລະຫວ່າງສອງອົງການນິຕິບັນຍັດ ຂອງສອງປະເທດ ທັງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນປົກກະຕິ; ຊຸກຍູ້ການແກ້ໄຂບັນຫາທີ່ຫຍຸ້ງຍາກ ໃນການນຳໃຊ້ການບໍລິການລົດໄຟລາວ-ຈີນ, ສູ້ຊົນສ້າງຄວາມສະດວກແກ່ຜູ້ໂດຍສານ ກໍຄືໃນການຂົນສົ່ງສິນຄ້າໃຫ້ຫລາຍຂຶ້ນເພື່ອນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ; ຂໍສະແດງຄວາມຂອບໃຈຕໍ່ຝ່າຍຈີນ ທີ່ໄດ້ມີຈິດໝາຍທາງການສົ່ງໃຫ້ສະພາແຫ່ງຊາດລາວ ເພື່ອຈັດກອງປະຊຸມທາງໄກ ໃນຫົວຂໍ້: "ການພັດທະນາເສດຖະກິດ ແລະ ການສ້າງ ແລະ ປັບປຸງກົດໝາຍ" ປັດຈຸບັນນີ້, ສະພາແຫ່ງຊາດລາວກຳລັງກະກຽມປະສານສົມທົບລາຍລະອຽດ ເພື່ອແຈ້ງຄືນໃຫ້ຝ່າຍຈີນຊາບ; ສືບຕໍ່ຊຸກຍູ້ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ, MOU, ສັນຍາ, ສົນທິສັນຍາທີ່ສອງລັດຖະບານໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ; ສືບຕໍ່ຮ່ວມມື ແລະ ສະໜັບສະໜູນ ເຊິ່ງກັນ ແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເພື່ອພາລະກິດປົກປັກຮັກສາສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາແບບຍືນຍົງ.

(ສົມນຶກ ແກ້ວໄຊຍະຈັກ)



## ກພຊສ...

ເລືອກຕັ້ງ 2 ແຂວງຜົ້ງສາລີ; ທ່ານ ທອງສຸກ ເປົ່າສຸລີ ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍ, ແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປີ 2022 ຂອງແຂວງ ໂດຍສະເພາະລົງເລິກໂຄງການລົງທຶນທີ່ເປັນບຸລິມະສິດຂອງລັດ, ໜີ້ສິນໂຄງການລົງທຶນຂອງລັດ ແລະ ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ປີ 2023; ທ່ານ ວັນໄຊ ສຸກສັນ ຫົວໜ້າພະແນການການເງິນແຂວງ ລາຍງານການຈັດຕັ້ງປະຕິບັດຄາດໝາຍ, ວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດວາລະແຫ່ງຊາດຢູ່ຂັ້ນແຂວງ ໂດຍສະເພາະສຸມໃສ່ແຜນວຽກຈຸດສຸມທີ 2 ກ່ຽວກັບການສ້າງຄວາມເຂັ້ມແຂງຖານລາຍຮັບ, ການຫັນເປັນທັນສະໄໝ, ການເກັບລາຍຮັບ; ແຜນວຽກຈຸດສຸມທີ 3 ກ່ຽວກັບປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານ ແລະ ການແກ້ໄຂໜີ້ສິນສາທາລະນະ ແລະ ແຜນວຽກຈຸດສຸມທີ 4 ກ່ຽວກັບຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ໂດຍສະເພາະສຸມໃສ່ຕິດຕາມກວດກາສະພາບການ ເຄື່ອນເໜັງຂອງອັດຕາແລກປ່ຽນ; ລາຍງານການຈັດຕັ້ງປະຕິບັດບັນດາຄາດໝາຍ, ແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2022; ທ່ານ ທະນູຄຳ ປິດຈະວົງ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ ລາຍງານການຈັດຕັ້ງປະຕິບັດຄາດໝາຍ, ວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດວາລະແຫ່ງຊາດ ຢູ່ຂັ້ນແຂວງ ໂດຍສະເພາະສຸມໃສ່ແຜນວຽກຈຸດສຸມທີ 4 ກ່ຽວກັບຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ໂດຍສະເພາະສຸມໃສ່ຕິດຕາມກວດກາສະພາບການເພີ່ມຂຶ້ນຂອງລາຄາສິນຄ້າ; ຕາງໜ້າອົງການກວດກາລັດແຂວງ ລາຍງານການຕິດຕາມ, ກວດກາຕາມຜົນການກວດສອບບົດສະຫລຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2020; ທ່ານ ບຸນພານິດ ແກ້ວຮຸ່ງ ຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດໂຄງການກໍ່ສ້າງຂົວຂ້າມນ້ຳອູ ເມືອງສຳພັນ ແຂວງຜົ້ງສາລີ ຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ດັດແກ້ເພີ່ມມູນຄ່າໂຄງການກໍ່ສ້າງຂົວຂ້າມນ້ຳອູ, ເມືອງສຳພັນ ແຂວງຜົ້ງສາລີ ສະບັບເລກທີ 16/ຄປຈ, ລົງວັນທີ 5/1/2021.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ພ້ອມກັນສົນທະນາ ແລະ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະກັນ ຢ່າງມີຈຸດສຸມ ແລະ ກົງໄປກົງມາ ທັງນີ້ເພື່ອເປັນຂໍ້ມູນໃນການຕິດຕາມກວດກາຂອງຄະນະທີມງານທີ່ມາຈາກສະພາແຫ່ງຊາດ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

## ເຝິກອົບຮົມ...

ການຂຽນການປະເມີນ, ການສະຫລຸບສັງລວມ ແລະ ອື່ນໆ.

ກອງປະຊຸມເຝິກອົບຮົມກ່ຽວກັບການປະເມີນຜົນການປະຕິບັດວຽກງານໃຫ້ແກ່ພະນັກງານ-ລັດຖະກອນພາຍໃນສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 11 ຕຸລາ 2022 ໂດຍການເປັນປະທານເປີດກອງປະຊຸມຂອງທ່ານນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານຄະນະກົມ, ຄະນະພະແນກ ຂອງບັນດາກົມ, ສູນ ແລະ ຫ້ອງການ ພາຍໃນສະພາແຫ່ງຊາດ ແລະ ວິທະຍາກອນຈາກກະຊວງພາຍໃນ.

ໃນກອງປະຊຸມ, ທ່ານ ແສງແກ້ວ ວົງນະລາດ ຫົວໜ້າກົມຈັດຕັ້ງ-ພະນັກງານ ໄດ້ຂຶ້ນຜ່ານບົດລາຍງານການປະເມີນການປະຕິບັດວຽກງານຂອງບັນດາກົມກົງຈັກພາຍໃນສະພາແຫ່ງຊາດ ໃນໄລຍະຜ່ານມາ; ພ້ອມນັ້ນ, ຍັງໄດ້ຮັບຟັງການເຜີຍແຜ່ດຳລັດ ແລະ ຄຳແນະນຳກ່ຽວກັບການປະເມີນການປະຕິບັດວຽກງານຂອງພະນັກງານ-ລັດຖະກອນ ແລະ ສົນທະນາແລກປ່ຽນບົດຮຽນເຊິ່ງກັນແລະກັນ ທັງຈັດຕັ້ງປະຕິບັດທົດລອງຕົວຈິງກ່ຽວກັບການປະເມີນຜົນໃຫ້ແກ່ບັນດາທ່ານທີ່ເຂົ້າຮ່ວມ ໂດຍການນຳພາທົດລອງເຮັດຕົວຈິງຈາກພາກສ່ວນກ່ຽວຂ້ອງຂອງກະຊວງພາຍໃນ ແລະ ກົມຈັດຕັ້ງ-ພະນັກງານ ສະພາແຫ່ງຊາດ.

(ນາງ ປາກາລັກ ພົມມີໄຊ)



## ກປຊສ...

(ສພຊ) ວັນທີ 12 ຕຸລາ 2022 ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ສະພາແຫ່ງຊາດ ແລະ ທ່ານ ນາງ ສົມພຽນ ວົງໄຊ ປະທານຄະນະກຳມະການຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫລວງວຽງຈັນ ພ້ອມດ້ວຍຄະນະໄດ້ເຄື່ອນໄຫວພົບປະເຮັດວຽກຢູ່ສະໂມສອນກອງບັນຊາການທະຫານອາກາດ ກະຊວງປ້ອງກັນປະເທດ ໂດຍການຕ້ອນຮັບຂອງທ່ານ ພົຈ. ບຸນມາ ຈັນທະວົງສາ ຫົວໜ້າການເມືອງກອງບັນຊາການທະຫານອາກາດ, ມີບັນດາຄະນະພັກ, ຄະນະນຳ, ພະນັກງານຫລັກແຫລ່ງ ແລະ ນາຍ ແລະ ພົນທະຫານພາຍໃນກອງບັນຊາການທະຫານອາກາດເຂົ້າຮ່ວມ.

ທັງນີ້ ເພື່ອເປັນການຈັດຕັ້ງຜັນຂະຫຍາຍຜົນສຳເລັດກອງປະຊຸມຍົກສູງບົດບາດການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃຫ້ແກ່ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫລວດ ຢູ່ບັນດາວິທະຍາຄານ, ໂຮງຮຽນ ແລະ ກົມກະຊວງປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບໃຫ້ຮັບຮູ້ເຊື່ອມຊຶມຢ່າງທົ່ວເຖິງ.

ກອງປະຊຸມ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບຜົນງານການເຄື່ອນໄຫວວຽກງານ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງກອງບັນຊາການທະຫານອາກາດ ໃນໄລຍະຜ່ານມາ; ຮັບຟັງການສະເໜີເອກະສານກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນນະຄອນຫລວງວຽງຈັນ ຊຸດທີ II; ສະເໜີກ່ຽວກັບສະພາບຄວາມເປັນມາ, ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່, ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດ; ການປະຕິບັດນະໂຍບາຍຕໍ່ພະນັກງານ-ນັກຮົບໃນກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ປະຕິບັດໜ້າທີ່ຢູ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ຮັບຟັງການໂອ້ລົມຕໍ່ກອງປະຊຸມຂອງທ່ານປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ນອກຈາກນີ້, ຄະນະ ຍັງຈະໄດ້ສືບຕໍ່ເຄື່ອນໄຫວພົບປະອ້າຍນ້ອງສອງກຳລັງຈົນຮອດວັນທີ 18 ຕຸລາ 2022 ເຊິ່ງມີພົບປະຢູ່ວິທະຍາຄານຕຳຫລວດປະຊາຊົນ (ດອນຕີ້ວ); ໂຮງຮຽນທິດສະດີການເມືອງ ປ້ອງກັນຄວາມສະຫງົບ (ໂພນພະເນົາ); ກອງບັນຊາການຕຳຫລວດປ້ອງກັນທີ່ຕັ້ງ (ສະໜາມມ້າ) ແລະ ກອງບັນຊາການຕຳຫລວດປ້ອງກັນສູນກາງ (ຫລັກ 6).

(ສອນສັກ ວັນວິໄຊ)

## ຮອງປະທານ...

ເພື່ອເກັບກຳຂໍ້ມູນ, ຮັບຟັງຄຳຄິດເຫັນຂອງການນຳທ້ອງຖິ່ນ ແລະ ຄຳເຫັນຂອງປະຊາຊົນ ຕໍ່ບັນຫາທີ່ພົ້ນເດັ່ນໃນຂົງເຂດຍຸຕິທຳ ໂດຍສະເພາະການປະຕິບັດມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ການແກ້ໄຂບັນຫາຢາເສບຕິດ ແລະ ບາງບັນຫາທີ່ກ່ຽວຂ້ອງກັບຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ເພື່ອເປັນການຄົ້ນຄວ້າ, ສະໜອງຂໍ້ມູນໃຫ້ຄະນະປະຈຳສະພາແຫ່ງຊາດ ມີຄຳເຫັນໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນອື່ນໆໃນຂົງເຂດຍຸຕິທຳ ເພື່ອໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາ.

ໃນວັນທີ 4 ຕຸລາ 2022, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ຮອງປະທານກຳມາທິການຍຸຕິທຳ(ກມຍທ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າພົບທ່ານ ຄຳໄຫລ ສີປະເສີດ ເຈົ້າແຂວງໆຫລວງນ້ຳທາ ເພື່ອແຈ້ງຈຸດປະສົງໃນການລົງເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດຢູ່ແຂວງຫລວງນ້ຳທາ; ພ້ອມນັ້ນ, ໄດ້ຮັບຟັງການລາຍງານສະພາບລວມຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຂອງແຂວງໂດຍຫຍໍ້ຈາກທ່ານເຈົ້າແຂວງ; ຈາກນັ້ນ, ໄດ້ປະຊຸມກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດໃນຂົງເຂດວຽກງານຍຸຕິທຳ ທີ່ຫ້ອງປະຊຸມຂອງສະພາປະຊາຊົນແຂວງ ໂດຍການເຂົ້າຮ່ວມຂອງ ທ່ານ ກົງເພັດ ແກ້ວບົວພາ ກຳມະການພັກແຂວງ ຮອງປະທານສະພາປະຊາຊົນແຂວງ, ເຂົ້າຮ່ວມມີຫົວໜ້າພະແນກຍຸຕິທຳ, ປະທານ, ຮອງປະທານ, ອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນ, ກອງບັນຊາການ ປກຊ- ປກສ, ອົງການກວດກາພັກ-ລັດແຂວງ, ສະຫະພັນນັກຮົບເກົ່າ, ຄະນະເລຂາທິການ, ຫົວໜ້າ, ຮອງຫົວໜ້າຂະແໜງ ພ້ອມດ້ວຍພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 29 ທ່ານ, ຍິງ 6 ທ່ານ; ໃນກອງປະຊຸມ, ທ່ານ ຈັນທະສຸລິນ ໝັ້ນປະດິດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ທັງເປັນປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ລາຍງານກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດໃນຂົງເຂດຍຸຕິທຳ, ຮັບຟັງການລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ; ລາຍງານຂອງ ປກສ ແຂວງ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍຂອງເຈົ້າໜ້າທີ່ຢູ່ຄ້າຍຄຸມຂັງ-ດັດສ້າງ ແລະ ການລາຍງານການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃນໄລຍະຜ່ານມາ.

ໂອກາດດັ່ງກ່າວ, ບັນດາຜູ້ເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນປະກອບຄຳເຫັນຕໍ່ກັບບັນດາບົດລາຍງານຂອງແຕ່ລະພາກສ່ວນ ກໍຄືການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ ເປັນຕົ້ນ ດ້ານດີ, ດ້ານອ່ອນ ແລະ ທິດທາງແກ້ໄຂ ເພື່ອເປັນເອກະພາບກັນໃນການຈັດຕັ້ງປະຕິບັດວຽກງານຕົວຈິງຂອງແຕ່ລະພາກສ່ວນໃນຂົງເຂດວຽກງານຍຸຕິທຳ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິກອງປະຊຸມສະພາແຫ່ງຊາດ ໃນຂົງເຂດວຽກງານຍຸຕິທຳ ມີຄວາມຖືກຕ້ອງ, ສອດຄ່ອງ, ເປັນໄປຕາມຂະບວນຍຸຕິທຳ ແລະ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

ໃນຕອນທ້າຍຂອງກອງປະຊຸມ, ທ່ານ ສີສູນທອນ ສ.ຜາບມີໄຊຍ໌ ໄດ້ມີຄຳເຫັນໂອ້ລົມ ແລະ ເນັ້ນໜັກເຊິ່ງທ່ານໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານໃນໄລຍະຜ່ານມາຂອງແຕ່ລະພາກສ່ວນໃນຂົງເຂດຍຸຕິທຳ ເຫັນວ່າແຕ່ລະພາກສ່ວນມີຄວາມຮັບຜິດຊອບສູງຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມທິດທາງແຜນການທີ່ວາງໄວ້ ສຸມໃສ່ປະຕິບັດໜ້າທີ່ວຽກງານຈົນມີຜົນສຳເລັດຫລາຍດ້ານ, ເອົາໃຈໃສ່ຊີ້ນຳ-ນຳພາຕາມຄວາມຮັບຜິດຊອບຕາມສິດ ແລະ ໜ້າທີ່ຂອງຕົນ; ພ້ອມນັ້ນ, ທ່ານຍັງໄດ້ຮຽກຮ້ອງໃຫ້ສືບຕໍ່ສູ້ຊົນບາງຄາດໝາຍເພື່ອໃຫ້ບັນລຸຕາມຄາດໝາຍ ສືບຕໍ່ວຽກງານສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານມີແນວຄິດໜັກແໜ້ນ ປັບປຸງການຈັດຕັ້ງຍົກສູງຂີດຄວາມສາມາດໃນຖັນແຖວພະນັກງານຫລັກແຫລ່ງ, ສະມາຊິກພັກ, ສຸມໃສ່ແກ້ໄຂບັນຫາທີ່ເປັນຂໍ້ຄົງຄ້າງ ທີ່ຍັງບໍ່ທັນບັນລຸຕາມແຜນປະຕິບັດກົນໄກປະສານງານລະຫວ່າງກຳມະການຍຸຕິທຳ ປກຊ-ປກສ ສະພາປະຊາຊົນແຂວງ ກັບພາກສ່ວນທີ່ກ່ຽວຂ້ອງໃຫ້ດີຂຶ້ນກວ່າເກົ່າ.

ພ້ອມດຽວກັນນັ້ນ, ຄະນະຍັງໄດ້ລົງເຄື່ອນໄຫວຕິດຕາມກວດກາຢູ່ຄ້າຍຄຸມຂັງດັດສ້າງ ພ້ອມທັງຮັບຟັງການລາຍງານສະພາບລວມຂອງການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາຂອງຄ້າຍຄຸມຂັງດັດສ້າງແຂວງຕື່ມອີກ.

## ສພຊ...

ຂາທິການສະພາແຫ່ງຊາດ; ມີບັນດານັກວິທະຍາກອນທີ່ມາຈາກສະພາແຫ່ງຊາດ, ຄະນະກົມ, ຄະນະພະແນກ, ລັດຖະກອນໃໝ່ ແລະ ລັດຖະກອນເຝິກງານ 95% ພ້ອມດ້ວຍພະນັກງານ-ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້, ເພື່ອເຮັດໃຫ້ລັດຖະກອນໃໝ່ ແລະ ລັດຖະກອນ 95 % ທີ່ບັນຈຸຊັບຊ້ອນເຂົ້າໃນກົມ, ສູນ ແລະ ຫ້ອງການ ຂອງບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ສະຖາບັນຄົ້ນຄວ້ານິຕິກຳ ໃຫ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ສິດ ແລະ ພັນທະຂອງພະນັກງານ-ລັດຖະກອນ; ພ້ອມນັ້ນ, ເພື່ອຮຽນຮູ້ກ່ຽວກັບບັນດາເອກະສານ ທີ່ນຳໃຊ້ໃນສະພາແຫ່ງຊາດ, ລະບຽບການ, ສະພາບແວດລ້ອມ ຂອງສະພາແຫ່ງຊາດ; ເພື່ອແນ່ໃສ່ໃຫ້ລັດຖະກອນດັ່ງກ່າວມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ, ມີຄວາມຈົງຮັກພັກດີຕໍ່ການຈັດຕັ້ງ, ມີຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ແລະ ປະຕິບັດລະບຽບການຕ່າງໆຢ່າງເຂັ້ມງວດ.

ກອງປະຊຸມ, ໄດ້ຮັບຟັງເນື້ອໃນເອກະສານຂອງກົມຈັດຕັ້ງ-ພະນັກງານ ປະກອບມີເນື້ອໃນຫຍໍ້ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ຈາກທ່ານ ແສງແກ້ວ ວົງນະລາດ ຫົວໜ້າກົມຈັດຕັ້ງ-ພະນັກງານ; ເນື້ອໃນເອກະສານຂອງກົມເລຂານຸການ ປະກອບມີ: ລະບົບເອກະສານ, ຮ່າງເອກະສານທາງລັດຖະການ ແລະ ການຈໍລະຈອນເອກະສານຂອງ ສພຊ ຈາກທ່ານ ຄຳສະໄໝ ສຳມາວົງ ຫົວໜ້າກົມເລຂານຸການ; ວຽກງານພິທີການ ແລະ ມາລະຍາດທາງສັງຄົມ ຈາກທ່ານ ຂັນທອງ ແພງສີໃຈ ຮອງຫົວໜ້າກົມບໍລິຫານ-ພິທີການ ແລະ ການເຜີຍແຜ່ລະບຽບການຄຸ້ມຄອງ ແລະ ນຳໃຊ້ຫໍສະພາແຫ່ງຊາດ ຈາກທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ.

ໃນໂອກາດນີ້, ທ່ານ ສົງຄຳ ວົງພະຈັນ ໄດ້ມີຄຳເຫັນໂອ້ລົມ ເຊິ່ງທ່ານໄດ້ກ່າວວ່າ: ກອງປະຊຸມຄັ້ງນີ້ ເປັນກອງປະຊຸມທີ່ສຳຄັນ ເພາະລັດຖະກອນໃໝ່ ແລະ ລັດຖະກອນ 95% ບັນຈຸເຂົ້າໃນກົງຈັກຂອງບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ ຂອງສະພາແຫ່ງຊາດ ຈະຕ້ອງໄດ້ຮັບຮູ້ເຊື່ອມຊຶມ, ເຂົ້າໃຈ ກ່ຽວກັບສິດ, ພັນທະ ຂອງຕົນ ລວມທັງເຂົ້າໃຈກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ລະບຽບການຕ່າງໆ ທີ່ກ່ຽວຂ້ອງຂອງສະພາແຫ່ງຊາດຕົນສັງກັດຢູ່ ເພື່ອເຮັດໃຫ້ການປະຕິບັດວຽກງານມີປະສິດທິຜົນສູງ; ພ້ອມນັ້ນ, ທ່ານຍັງໄດ້ກ່າວຕື່ມອີກວ່າ: ໃຫ້ບັນດາທ່ານທີ່ເປັນລັດຖະກອນໃໝ່ ແລະ ລັດຖະກອນ 95% ທີ່ສັງກັດຢູ່ກົມ, ສູນ ແລະ ຫ້ອງການ ພາຍໃນສະພາແຫ່ງຊາດ ເອົາໃຈໃສ່ເຝິກຝົນຫລໍ່ຫລອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິບັດ ໃຫ້ມີຄວາມໜັກແໜ້ນ, ເອົາໃຈໃສ່ພັດທະນາທາງດ້ານວິຊາສະເພາະ, ພາສາຕ່າງປະເທດ ກາຍເປັນລັດຖະກອນທີ່ດີເດັ່ນ; ເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ກົດໝາຍ, ນິຕິກຳລຸ່ມກົດໝາຍ ເພື່ອເປັນບ່ອນອີງໃນການປະຕິບັດວຽກງານຂອງຕົນໃຫ້ໄດ້ຮັບຜົນດີ; ເອົາໃຈໃສ່ປະຕິບັດວຽກງານ ກໍຄືໜ້າທີ່ການເມືອງ ທີ່ການຈັດຕັ້ງມອບໝາຍໃຫ້ມີປະສິດທິພາບປະສິດທິຜົນສູງ; ຕ້ອງເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍລັດຖະກອນ ເປັນຕົ້ນ ສິດ, ພັນທະ, ໜ້າທີ່, ຂໍ້ຫ້າມ, ຈັນຍາບັນ, ຈັນຍາທຳ ໃຫ້ຖືກຕ້ອງ; ເຄົາລົບນັບຖືການຈັດຕັ້ງ, ເຄົາລົບ ແລະ ປະຕິບັດລະບຽບຕ່າງໆ ພາຍໃນສະພາແຫ່ງຊາດ ຢ່າງເຂັ້ມງວດ; ປັບປຸງແບບແຜນວິທີເຮັດວຽກ ໃຫ້ສອດຄ່ອງກັບວຽກງານຂອງຕົນແຕ່ລະໄລຍະ; ປະສານສົມທົບກັບພາກສ່ວນກ່ຽວຂ້ອງຕາມການມອບໝາຍຂອງຂັ້ນເທິງ, ການຈັດຕັ້ງ ໃຫ້ໄດ້ຮັບຜົນດີ; ມີຄວາມສາມັກຄີນຳເພື່ອນຮ່ວມງານ ແລະ ມີແບບແຜນດຳລົງຊີວິດທີ່ປອດໃສ ທັງໝົດນີ້ເພື່ອເປັນທິດທາງໃຫ້ບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ສືບຕໍ່ຄົ້ນຄວ້າ, ມີວິທີການ ແລະ ມາດຕະການຕົວຈິງຕໍ່ຕົນເອງ ເພື່ອໃຫ້ກາຍເປັນພະນັກງານ-ລັດຖະກອນທີ່ດີເດັ່ນ ແລະ ເປັນພະນັກງານສືບທອດໃນອະນາຄົດ.

(ນາງ ສຸພາວັນ ທອນສະນິດ)



## ຕິດຕາມ...

ຄວາມປອດໄພ ແລະ ສຸຂະພາບ ເພື່ອນຳເອົາຂໍ້ມູນໄປວິເຄາະວິໄຈ ໃຫ້ເຫັນໄດ້ສະພາບຕົວຈິງ ແລະ ນຳເອົາບັນຫາດັ່ງກ່າວເຂົ້ານຳສະເໜີຕໍ່ລັດຖະບານນຳໄປພິຈາລະນາແກ້ໄຂໃນຕໍ່ໜ້າ.

ໃນໂອກາດນີ້, ຕາງໜ້າພະແນກການກ່ຽວຂ້ອງ ໄດ້ຜັດປ່ຽນກັນລາຍງານສະພາບລວມໃນການຈັດຕັ້ງປະຕິບັດວຽກງານໃນດ້ານຕ່າງໆທີ່ຕິດພັນກັບການຈັດຕັ້ງປະຕິບັດວຽກງານໃນຂົງເຂດຄວາມຮັບຜິດຊອບຂອງຕົນໃຫ້ຮັບຊາບ ໂດຍສະເພາະແມ່ນການຄຸ້ມຄອງຕິດຕາມກວດກາການຈັດຕັ້ງປະຕິບັດສັນຍາລົງທຶນຂອງບັນດາໂຄງການ ເປັນຕົ້ນແມ່ນການນຳໃຊ້ສັນຍາແຮງງານພາຍໃນແຂວງ, ການຄຸ້ມຄອງປົກປ້ອງສິດ ແລະ ຜົນປະໂຫຍດ ລວມທັງບັນຫາສຸຂະພາບ ແລະ ຄວາມປອດໄພ ຂອງຜູ້ອອກແຮງງານ, ການພັດທະນາຊັບພະຍາກອນມະນຸດພາຍໃນແຂວງ, ຄວາມສາມາດໃນການສ້າງ, ເຝິກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານໃຫ້ແກ່ກຳລັງແຮງງານໃນແຕ່ລະປີ ແລະ ອື່ນໆ ທັງນີ້ກໍເພື່ອເປັນການເກັບກຳຂໍ້ມູນການຈັດຕັ້ງປະຕິບັດວຽກງານ ເພື່ອຊອກໃຫ້ເຫັນສະພາບ, ຜົນສຳເລັດ, ຈຸດອ່ອນ, ຂໍ້ຄົງຄ້າງ, ສາເຫດຂອງບັນຫາ, ວິທີການ ແລະ ມາດຕະການແກ້ໄຂໃນຕໍ່ໜ້າ ແລ້ວນຳເອົາບັນຫາດັ່ງກ່າວສະເໜີຕໍ່ລັດຖະບານນຳໄປພິຈາລະນາແກ້ໄຂ.

ພ້ອມດຽວກັນນັ້ນ, ຄະນະຍັງໄດ້ລົງຕິດຕາມກວດກາຢູ່ໂຮງຮຽນເຕັກນິກ-ວິຊາຊີບ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງໂຮງຮຽນດັ່ງກ່າວ.

(ໂສລະຢ່າ ໄຊຍະວົງ)

# ຫາລື ແລະ ກະກຽມເນື້ອໃນກອງປະຊຸມ ວິສາມັນຂອງສະພາປະຊາຊົນແຂວງຫລວງນ້ຳທາ



(ສພຊ) ຕອນແລງວັນທີ 6 ຕຸລາ 2022 ຢູ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ເປີດກອງປະຊຸມປຶກສາຫາລື ແລະ ກະກຽມເນື້ອໃນຮອບດ້ານໃຫ້ແກ່ກອງປະຊຸມວິສາມັນເທື່ອທີ II ຂອງສະພາປະຊາຊົນແຂວງຫລວງນ້ຳທາ ຊຸດທີ II ທີ່ຈະພິຈາລະນາ, ຮັບຮອງເອົາຂໍ້ຕົກລົງເຈົ້າແຂວງ ວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍຜົນກະທົບຈາກໂຄງການພັດທະນາຕົວເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ຄຳຟອງ ອິນມານີ ຮອງເລຂາພັກແຂວງ ປະທານສະພາປະຊາຊົນແຂວງ ແລະ ທ່ານ ອ່ອນຈັນ ຄຳພາວົງ ຮອງເຈົ້າແຂວງຫລວງນ້ຳທາ, ຜູ້ຊີ້ນຳວຽກງານເສດຖະກິດແຂວງ, ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນການ, ຄະນະຮັບຜິດຊອບສ້າງນິຕິກຳຮ່າງຂໍ້ຕົກລົງເຈົ້າແຂວງ, ຫົວໜ້າ-ຮອງຫົວໜ້າຂະແໜງພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ 35 ຄົນ ຍິງ 6 ຄົນ.

ກອງປະຊຸມໄດ້ຮັບຟັງການລາຍງານໂດຍຫຍໍ້ຂອງຮ່າງຂໍ້ຕົກລົງເຈົ້າແຂວງວ່າດ້ວຍການກຳນົດລາຄາຫົວໜ່ວຍຊົດເຊີຍຜົນກະທົບຈາກໂຄງການພັດທະນາຕົວເມືອງທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຢູ່ເຂດນາເຕີຍ ເມືອງຫລວງນ້ຳທາ ແຂວງຫລວງນ້ຳທາ ເຊິ່ງຂໍ້ຕົກລົງດັ່ງກ່າວ ແມ່ນໄດ້ນຳເຂົ້າພິຈາລະນາ, ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາປະຊາຊົນແຂວງ ທີ່ຜ່ານມາແຕ່ບໍ່ທັນຮັບຮອງ ແລະ ໄດ້ນຳໄປປັບປຸງໃຫ້ຖືກຕ້ອງສອດຄ່ອງໃຫ້ດີກວ່າເກົ່າ, ເພື່ອຮັບປະກັນຈະນຳເຂົ້າພິຈາລະນາໃນກອງປະຊຸມວິສາມັນເທື່ອທີ II ຂອງສະພາປະຊາຊົນແຂວງຫລວງນ້ຳທາ ຊຸດທີ II ລວມທັງໝົດ 7 ໝວດ, 23 ມາດຕາ; ພ້ອມດຽວກັນນີ້, ກອງປະຊຸມໄດ້ມີການແລກປ່ຽນ, ປະກອບຄຳຄິດເຫັນ ແລະ ຄວາມເປັນເອກະພາບກັນຕໍ່ຮ່າງຂໍ້ຕົກລົງເຈົ້າແຂວງສະບັບນີ້ ຢ່າງມີຈຸດສຸມ ເພື່ອເຮັດໃຫ້ເນື້ອໃນຮ່າງຂໍ້ຕົກລົງສະບັບນີ້ມີເນື້ອໃນຖືກຕ້ອງ, ຮັດກຸມ, ສອດຄ່ອງຕາມລະບຽບກົດໝາຍກັບຄວາມເປັນຈິງ ແລະ ຮັບປະກັນເນື້ອໃນຮອບດ້ານໃຫ້ທວງທັນກັບເວລາທີ່ຈະເປີດກອງປະຊຸມວິສາມັນເທື່ອທີ II ຂອງສະພາປະຊາຊົນແຂວງ ຊຸດທີ II ທີ່ຈະໄຂຂຶ້ນໃນຕໍ່ໜ້ານີ້.

(ນັກຂ່າວ ສພຂ ຫລວງນ້ຳທາ)

# ກຳມະບານຮາກຖານສະພາປະຊາຊົນແຂວງ ດຳເນີນຊີວິດປະຈຳເດືອນ 8-9 ປີ 2022

(ສພຊ) ຕອນບ່າຍຂອງວັນອັງຄານທີ 4 ຕຸລາ 2022 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ດຳເນີນຊີວິດປະຈຳເດືອນ 8-9 ປີ 2022 ຂອງກຳມະບານຮາກຖານສະພາປະຊາຊົນແຂວງ ໂດຍການເປັນປະທານຂອງສະຫາຍ ນາງ ຄຳພອນ ພົມມະຈັນ ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານສະຫະພັນກຳມະບານຮາກຖານ ສພຂ; ເຂົ້າຮ່ວມມີສະຫາຍ ຄຳດີ ວົງລ້ອມ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ, ມີຄະນະກຳມະບານ, ບັນດາສະຫາຍສະມາຊິກກຳມະບານພາຍໃນ ສພຂ ເຂົ້າຮ່ວມ.



ການດຳເນີນຊີວິດຄັ້ງນີ້, ໄດ້ຮັບຟັງການຜ່ານຮ່າງບົດສະຫລຸບຕີລາຄາການເຄື່ອນໄຫວວຽກງານປະຈຳເດືອນ 8-9 ປີ 2022 ຂອງກຳມະບານຮາກຖານສະພາປະຊາຊົນແຂວງ ເຊິ່ງຕະຫລອດໄລຍະ 2 ເດືອນຜ່ານມາ ກຳມະບານຮາກຖານ ສພຂ ໄດ້ຖືເອົາການສຶກສາອົບຮົມດ້ານການເມືອງ-ແນວຄິດເປັນບັນຫາຫລັກ ເພື່ອເຮັດໃຫ້ສະມາຊິກກຳມະບານມີແນວຄິດອຸ່ນອ່ຽນທຸ່ນທ່ຽງ, ມີຄວາມສາມັກຄີພາຍໃນ-ພາຍນອກໃຫ້ແໜ້ນແຟ້ນ, ຊ່ວຍເຫລືອເຊິ່ງກັນແລະກັນ, ມີຄວາມຫ້າວຫັນປະຕິບັດໜ້າທີ່ວຽກງານວິຊາສະເພາະສຳເລັດຜົນຕາມລະດັບຄາດໝາຍ ແລະ ໄດ້ຮັບຟັງການຜ່ານຮ່າງກົດລະບຽບວ່າດ້ວຍກອງທຶນພັດທະນາ 3 ອົງການຈັດຕັ້ງມະຫາຊົນສະພາປະຊາຊົນແຂວງອຸດົມໄຊ. ຫລັງຈາກນັ້ນບັນດາທ່ານສະມາຊິກກຳມະບານ ໄດ້ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ.

ຕອນທ້າຍ, ປະທານສະຫະພັນກຳມະບານຮາກຖານ ສພຂ ໄດ້ສະຫລຸບສັງລວມບັນຫາຕ່າງໆ ພ້ອມທັງມີຄຳເຫັນຕໍ່ສະມາຊິກກຳມະບານ ເຊິ່ງສະຫາຍໄດ້ເນັ້ນໜັກໃຫ້ແຕ່ລະສະຫາຍສະມາຊິກກຳມະບານ ຈົ່ງເພີ່ມທະວີໃນການເຊື່ອມຊຶມບັນດານິຕິກຳ, ມີແນວຄິດຫຼັກໝັ້ນ, ອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ແນວທາງຂອງພັກ-ລັດ, ເຊື່ອໝັ້ນຕໍ່ການນຳພາຂອງກົມກອງ, ເພີ່ມທະວີຄວາມສາມັກຄີພາຍໃນເປັນຈິດໜຶ່ງໃຈດຽວ, ເອົາໃຈໃສ່ຕໍ່ວຽກງານວິຊາສະເພາະທີ່ຕົນຮັບຜິດຊອບ ໃຫ້ມີຜົນສຳເລັດ.

(ແສງພອນ ອິນນະລົງ)

# ສະຫລຸບຂໍ້ແຂ່ງຂັນ 5 ເປັນເຈົ້າ ປີ 2022 ຂອງກຳມະບານຮາກຖານ ສພຂ ສາລະວັນ

(ສພຊ) ໃນຕອນເຊົ້າຂອງວັນທີ 12 ຕຸລາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດພິທີສະຫລຸບຂະບວນການແຂ່ງຂັນ 5 ເປັນເຈົ້າຂອງກຳມະບານຮາກຖານ ສພຂ ສາລະວັນ ປະຈຳປີ 2022 ໂດຍການເຂົ້າຮ່ວມເປັນປະທານຂອງສະຫາຍ ພັທ. ນາງ ທອງເຫຼືອງ ໂຄດປັນຍາປະທານກຳມະບານຮາກຖານ ສພຂ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ, ສະຫາຍ ບຸນທະວີ ພົມມະສານ ປະທານຄະນະບໍລິຫານງານສະຫະພັນກຳມະບານແຂວງ, ສະຫາຍ ສົມພອນ ແສງສຸລິຈັນ ຮອງເລຂາຄະນະພັກຮາກຖານ ສພຂ ຄະນະບໍລິຫານງານກຳມະບານແຂວງ ເລຂາທິການ ສພຂ, ມີບັນດາຄະນະພັກ, ຄະນະກຳມະບານຮາກຖານ ພ້ອມດ້ວຍສະມາຊິກກຳມະບານ ແລະ ແຂກທີ່ຖືກເຊີນ ເຂົ້າຮ່ວມ.



ໃນພິທີ, ສະຫາຍ ນາງ ອິນທະນົງສອນ ຈັນທະລືໄຊ ໄດ້ຂຶ້ນຜ່ານ ບົດສະຫຼູບຕີລາຄາຄືນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງກຳມະບານຮາກຖານ ສພຂ ປະຈຳປີ 2022 ແລະ ທິດທາງ ແຜນການ ປີ 2023 ເຊິ່ງປັດຈຸບັນກຳມະບານຮາກຖານ ສພຂ ມີສະມາຊິກກຳມະບານທັງໝົດ 47 ສະຫາຍ ຍິງ 26 ສະຫາຍ; ໄລຍະຜ່ານມາກຳມະບານຮາກຖານ ສພຂ ໄດ້ຖືເອົາວຽກງານໂຄສະນາສຶກສາອົບຮົມການເມືອງ-ແນວຄິດເປັນຫລັກ ດ້ວຍການເຜີຍແຜ່, ເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ໂດຍສະເພາະແມ່ນນິຕິກຳຕ່າງໆຂອງສູນກາງສະຫະພັນກຳມະບານວາງອອກແຕ່ລະໄລຍະໃຫ້ສະມາຊິກກຳມະບານ, ພະນັກງານ-ລັດຖະກອນພາຍໃນ ສພຂ ໄດ້ຮັບຮູ້ ແລະ ເຂົ້າໃຈ ເຊິ່ງພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ໃນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຕິດພັນກັບການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບການປະຕິບັດວຽກງານວິຊາສະເພາະຢູ່ໃນກົມກອງຂອງຕົນ ເຊິ່ງແຕ່ລະເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ເຫັນວ່າສາມາດປະຕິບັດໄດ້ 95% ຂຶ້ນໄປ. ພ້ອມນັ້ນ, ຍັງໄດ້ຮັບຟັງກ່ຽວກັບແຜນການສູ້ຊົນຂະບວນການແຂ່ງຂັນ 5 ເປັນເຈົ້າ ໃນປີ 2023; ຈາກນັ້ນ, ກໍໄດ້ມີພິທີມອບ-ຮັບ ໃບຢັ້ງຢືນກຳມະບານ 5 ເປັນເຈົ້າ ໃຫ້ສະມາຊິກກຳມະບານ ແລະ ຄະນະກຳມະຮາກຖານ ສພຂ ຕື່ມອີກ.

ໃນຕອນທ້າຍກອງປະຊຸມ ກໍໄດ້ຮັບຟັງການໂອ້ລົມຂອງສະຫາຍ ບຸນທະວີ ພົມມະສານ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍ ແລະ ຊົມເຊີຍຕໍ່ຜົນງານທີ່ກຳມະບານຮາກຖານ ສພຂ ຍາດມາໄດ້ໃນໄລຍະຜ່ານມາ. ພ້ອມດຽວກັນນີ້, ສະຫາຍໄດ້ເນັ້ນໃຫ້ຄະນະກຳມະບານຮາກຖານ ສພຂ ສືບຕໍ່ໂຄສະນາສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກກຳມະບານ, ພະນັກງານ-ລັດຖະກອນ ພາຍໃນຮາກຖານ, ສືບຕໍ່ຮັກສາມູນເຊື້ອ ພ້ອມທັງຍູ້ແຮງແຜນການຈັດຕັ້ງປະຕິບັດຂະບວນການແຂ່ງຂັນເນື້ອໃນ 5 ເປັນເຈົ້າ ປະຈຳປີ 2023 ຂອງກຳມະບານຮາກຖານ ສພຂ ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ.

(ດີລຳພົນ ພົມມະຈັນ)

# ກຳມະບານຮາກຖານ ສພຂ ຫົວພັນ ປະເມີນຜົນເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ




(ສພຊ) ວັນທີ 12 ຕຸລາ 2022 ກຳມະບານຮາກຖານສະພາປະຊາຊົນແຂວງ (ສພຂ) ຫົວພັນ ໄດ້ຈັດກອງປະຊຸມປະເມີນຜົນເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022 ຢູ່ທີ່ຫ້ອງປະຊຸມ ສພຂ ໂດຍການເປັນປະທານຂອງສະຫາຍ ສຸກມີໄຊ ສີງບຸນເຮືອງ ຮອງປະທານກວດກາໜ່ວຍພັກ, ຮອງເລຂາທິການ ສພຂ, ຄະນະບໍລິຫານງານສະຫະພັນກຳມະບານແຂວງ, ປະທານກຳມະບານຮາກຖານ ສພຂ; ເຂົ້າຮ່ວມໂດຍສະຫາຍ ແທງ ວິໄລພອນ ຄະນະໜ່ວຍພັກ, ຜູ້ຊີ້ນຳວຽກງານອົງການຈັດຕັ້ງມະຫາຊົນ, ປະທານຄະນະກຳມະການເສດຖະກິດ ແຜນການ ແລະ ການເງິນ ສພຂ ພ້ອມດ້ວຍບັນດາສະມາຊິກກຳມະບານຮາກຖານພາຍໃນ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫລຸບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ປະຈຳປີ 2022 ແລະ ທິດທາງແຜນການ ປີ 2023 ຂອງກຳມະບານຮາກຖານ ສພຂ ແລະ ບົດແນະນຳສະບັບເລກທີ 284/ສກລ, ລົງວັນທີ 17 ມີນາ 2022 ກ່ຽວກັບການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວ ຈາກສະຫາຍປະທານ-ຮອງປະທານກຳມະບານຮາກຖານ ສພຂ ເຊິ່ງໄດ້ຍົກໃຫ້ເຫັນດ້ານດີຜົນງານ ແລະ ດ້ານອ່ອນຂໍ້ຄົງຄ້າງ, ພ້ອມກັນປະກອບຄຳຄິດເຫັນໃສ່ຮ່າງບົດສະຫລຸບໃຫ້ມີເນື້ອໃນຄົບຖ້ວນ ແລະ ສາມາດຈັດຕັ້ງປະຕິບັດໄດ້; ຈາກນັ້ນ, ສະມາຊິກກຳມະບານ ທຸກສະຫາຍໄດ້ຜ່ານໃບສຳຫລວດຕົນເອງ, ພ້ອມທັງຕຳນິສິ່ງຂ່າວ, ກໍ່ສ້າງເຊິ່ງກັນແລະກັນ ທັງປະເມີນໃຫ້ຄະແນນຕົນເອງ ແລະ ໝູ່ຄະນະ; ແລ້ວຕີລາຄາແບ່ງປະເພດຕາມເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຂອງສະຫະພັນກຳມະບານລາວວາງອອກ. ຜ່ານການປະເມີນຕີລາຄາ ມີປະເພດດີເລີດ, ປະເພດດີສ່ວນປະເພດກາງ ແລະ ອ່ອນແມ່ນບໍ່ມີ. ອີງໃສ່ມາດຖານເງື່ອນໄຂເຫັນວ່າກຳມະບານຮາກຖານ ສພຂ ສາມາດສະເໜີຂັ້ນເທິງຮັບຮອງເປັນກຳມະບານຮາກຖານ 5 ເປັນເຈົ້າ ປະຈຳ ປີ 2022.

ຕອນທ້າຍກອງປະຊຸມ ຍັງໄດ້ຮັບຟັງການໂອ້ລົມຂອງສະຫາຍ ແທງ ວິໄລພອນ ສະຫາຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານການເຄື່ອນໄຫວ ເຊິ່ງວຽກງານກຳມະບານທີ່ຍາດມາໄດ້ໃນໄລຍະ 1 ປີຜ່ານມາ ພ້ອມທັງຮຽກຮ້ອງໃຫ້ຄະນະກຳມະບານຮາກຖານ ກໍຄືສະມາຊິກກຳມະບານພາຍໃນຮາກຖານທັງໝົດ ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ, ກຳໄດ້ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ໂດຍສະເພາະແມ່ນບັນດາສະຫາຍສະມາຊິກກຳມະບານທີ່ເປັນພະນັກງານຫລັກແຫລ່ງນຳພາ-ຄຸ້ມຄອງຢູ່ແຕ່ລະຂະແໜງ ຕ້ອງເປັນແບບຢ່າງທີ່ດີ ເພື່ອໃຫ້ຜູ້ອື່ນໄດ້ຮຽນນຳ ຄືດັ່ງຄຳເວົ້າທີ່ວ່າ "ຄວາມເປັນແບບຢ່າງທີ່ດີ ແມ່ນການນຳພາທີ່ດີ", ສາມາດເຮັດໃຫ້ສະມາຊິກກຳມະບານ ມີແນວຄິດອຸ່ນອຽນທຸ່ນທ່ຽງ, ເຂັ້ມແຂງ, ໜັກແໜ້ນທາງດ້ານການເມືອງ ຍົກສູງສະຕິຕື່ນຕົວ ແລະ ຄວາມຮັບຜິດຊອບ, ຄວາມເປັນເຈົ້າການໃຫ້ສູງຂຶ້ນ; ເພີ່ມທະວີຄວາມສາມັກຄີພາຍໃນໜັກແໜ້ນ ແລະ ພາຍນອກກວ້າງຂວາງ, ຍົກສູງຄວາມຮູ້, ຄວາມສາມາດ ແລະ ເປັນແບບຢ່າງນຳໜ້າຮັກສາມູນເຊື້ອກຳມະບານຮາກຖານ 5 ເປັນເຈົ້າ ໃນປີຕໍ່ໆໄປ; ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງສູນກາງສະຫະພັນກຳມະບານລາວ ແລະ ມະຕິ ຄັ້ງທີ VIII ຂອງສະຫະພັນກຳມະບານ ແຂວງຫົວພັນ ໃຫ້ປາກົດຜົນເປັນຈິງ, ສືບຕໍ່ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງກຳມະກອນ ແລະ ຊາວຜູ້ອອກແຮງງານເພື່ອປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ ແລະ ຈັດຕັ້ງປະຕິບັດແຜນການກຳມະບານວາງອອກໃຫ້ບັນລຸຕາມຈຸດປະສົງທີ່ວາງໄວ້.

(ນາງ ປຸ້ຍນິຕາ ເຜີງມີໄຊ)

# ພົບປະຜູ້ມີສິດເລືອກຕັ້ງ ຢູ່ເມືອງໄຊ ແລະ ເມືອງຮຸນ



(ສພຊ) ໃນລະຫວ່າງວັນທີ 26-27 ແລະ 30 ກັນຍາ 2022, ທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແລະ ທ່ານ ທອງຄຳ ສີຫາລາດ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງໄຊ ໄດ້ສຳເລັດການລົງເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ່ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ຢູ່ສະໂມສອນເມືອງໄຊ ແລະ 5 ບ້ານຄື: ພູສະຫວັນ, ກິວເຮ້ຍ, ນາຊາຍທອງ, ມົກກົກ ແລະ ບ້ານຈອມຈັງ, ມີບັນດາທ່ານຄະນະປະຈຳພັກເມືອງ, ກຳມະການພັກເມືອງ, ຫົວໜ້າ-ຮອງຫົວໜ້າຫ້ອງການ, ພະນັກງານ-ລັດຖະກອນ, 2 ກຳລັງ ປກຊ-ປກສ, ເລຂາພັກບ້ານ-ນາຍບ້ານ, ອົງການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມທັງ ໝົດ 351 ທ່ານ ຍິງ 133 ທ່ານ.

ໃນພິທີໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຂອງອົງການປົກຄອງເມືອງໄຊ ແລະ ຂອງແຕ່ລະບ້ານ. ຫລັງຈາກນັ້ນ, ບັນດາທ່ານ ສສຊ, ສສຂ ກໍໄດ້ພັດປ່ຽນກັນເຜີຍແຜ່ເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II. ໂອກາດດັ່ງກ່າວ ກໍໄດ້ຮັບຟັງຄຳຄິດເຫັນ ແລະ ຄຳສະເໜີຂອງພະນັກງານຫລັກແຫລ່ງ, ອຳນາດການປົກຄອງບ້ານ ແລະ ພໍ່ແມ່ນປະຊາຊົນບັນດາເຜົ່າ, ໃນການພັດທະນາໂຄງລາງພື້ນຖານ, ບັນຫາຄ່າຄອງຊີບໃນປັດຈຸບັນ, ບັນຫານ້ຳມັນເຊື້ອໄຟແພງ ແລະ ອື່ນໆ.

ຕໍ່ກັບຄຳຄິດເຫັນ ແລະ ຄຳສະເໜີດັ່ງກ່າວ, ສສຊ-ສສຂ ໄດ້ຊີ້ແຈງກັບທີ່ແລ້ວ ແລະ ບາງບັນຫາຈະໄດ້ສັງລວມເພື່ອນຳໄປສະເໜີຕໍ່ກອງປະຊຸມສະພາແຫ່ງຊາດ ແລະ ໃຫ້ທາງຄະນະປະຈຳສະພາປະຊາຊົນແຂວງ ຄົ້ນຄວ້າປຶກສາຫາລື ແລະ ສະເໜີຕໍ່ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂຕາມພາລະບົດບາດ.

ພ້ອມດຽວກັນນັ້ນ, ທ່ານ ນາງ ຄຳພອນ ພົມມະຈັນ ຮອງປະທານ ສພຂ, ສະມາຊິກສະພາແຫ່ງປະຈຳເຂດເລືອກຕັ້ງທີ 4 ຍັງໄດ້ຕາງໜ້າຄະນະປະຈຳ ສພຂ ມອບເຂົ້າສານ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ຄົວເຮືອນ ແລະ ອື່ນໆ ລວມມູນຄ່າ 5.816.000 ກີບ ໃຫ້ທາງຄະນະຄຸ້ມຄອງໄພພິບັດຂັ້ນເມືອງ ເພື່ອນຳໄປມອບໃຫ້ປະຊາຊົນທີ່ຖືກຜົນກະທົບຈາກໄພພິບັດນ້ຳຖ້ວມ ຢູ່ເມືອງໄຊ ຕື່ມອີກ.

ຈາກນັ້ນ, ລະຫວ່າງວັນທີ 26-28 ກັນຍາ 2022 ທ່ານ ທອງຄານ ວັດສະດາກອນ ຄະນະ ປະຈຳ-ປະທານຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາປະຊາຊົນແຂວງ ແລະ ທ່ານ ນາງ ສີວັນ ທະວິໄຊ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຮຸນ ໄດ້ສຳເລັດການລົງພົບປະພົນລະເມືອງຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ທີ່ເມືອງຮຸນ ໄດ້ 6 ບ້ານຄື: ຈອມແລງ, ດອນນາ, ໂພນໄຊ, ພູໂພນ, ນາໂພກ ແລະ ນາເງິນ ມີເລຂາພັກບ້ານ-ນາຍບ້ານ, ອົງການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມທັງໝົດ 418 ຄົນ ຍິງ 173 ຄົນ.

ໃນການເຄື່ອນໄຫວຄັ້ງນີ້, ເພື່ອຜັນຂະຫຍາຍ ແລະ ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຸດທີ II ໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈ. ໂອກາດດັ່ງກ່າວ ຍັງໄດ້ຮັບຟັງການລາຍງານສະພາບການໂດຍຫຍໍ້ຂອງອົງປົກຄອງບ້ານແຕ່ລະບ້ານ ພ້ອມທັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງປະຊາຊົນ ເຊິ່ງບັນດາຄຳສະເໜີສ່ວນຫຼາຍແມ່ນກ່ຽວກັບການພັດທະນາ ແລະ ປັບປຸງໂຄງລ່າງພື້ນຖານ ເປັນຕົ້ນແມ່ນບັນຫາເສັ້ນທາງ, ນ້ຳລິນ, ອາຄານຮຽນ, ການປູກ-ການລ້ຽງ ແລະ ອື່ນໆ ຕໍ່ກັບຄຳສະເໜີດັ່ງກ່າວ, ສະມາຊິກສະພາປະຊາຊົນແຂວງ ກໍ່ໄດ້ອະທິບາຍ, ຊີ້ແຈງບາງບັນຫາກັບທີ່ ແລະ ຈະໄດ້ສັງລວມເພື່ອນຳເອົາຂໍ້ສະເໜີສິ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຕາມພາລະບົດບາດ ແລະ ທັນກັບເວລາ.

(ແສງພອນ ອິນນະລົງ)




# ສພຂ ກັບພະແນກກະສິກຳ ແລະ ປ່າໄມ້ແຂວງພົບປະແລກປ່ຽນບົດຮຽນ



(ສພຊ) ເມື່ອເດືອນກັນຍາ 2022 ທີ່ສູນສົ່ງເສີມເຕັກນິກກະສິກຳ ແລະ ປ່າໄມ້ ຮ່ວມມືລາວ-ຫວຽດນາມ ໄດ້ຈັດກອງພົບປະແລກປ່ຽນບົດຮຽນລະຫວ່າງສະພາປະຊາຊົນແຂວງ (ສພຂ) ຫົວພັນ ກັບພະແນກກະສິກຳ ແລະ ປ່າໄມ້ແຂວງຫົວພັນ ໂດຍການເປັນປະທານຂອງທ່ານ ຄອນປະພັນ ເລືອງສີຈັນທອງ ຮອງປະທານ ສພຂ, ມີບັນດາທ່ານຄະນະປະຈຳ ສພຂ, ຄະນະກຳມະການ, ຄະນະເລຂາທິການ, ການນຳຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ຕະຫລອດຮອດພະນັກງານ-ລັດຖະກອນ ທັງສອງພາກສ່ວນເຂົ້າຮ່ວມຢ່າງພ້ອມພຽງ.

ໃນວາລະດຳເນີນກອງປະຊຸມ ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດ ແລະ ການຄຸ້ມຄອງກິດຈະກຳທີ່ ສສ.ຫວຽດນາມ ໃຫ້ທຶນຊ່ວຍເຫລືອໂດຍຫຍໍ້ຈາກຫົວໜ້າສູນ ເປັນຕົ້ນແມ່ນປະຫວັດຄວາມເປັນມາຂອງສູນ ເຊິ່ງສູນດັ່ງກ່າວ ຕັ້ງຢູ່ບ້ານອື້ງ ເມືອງຊຳເໜືອ ແຂວງຫົວພັນ ແມ່ນສູນໜຶ່ງທີ່ຂຶ້ນກັບພະແນກກະສິກຳ ແລະ ປ່າໄມ້ແຂວງ, ສ້າງຕັ້ງຂຶ້ນໃນປີ 2017, ມີເນື້ອທີ່ທັງໝົດ 15,2 ເຮັກຕາ, ສູນແຫ່ງນີ້ແມ່ນທຶນຊ່ວຍເຫລືອຈາກ ສສ.ຫວຽດນາມ ແລະ ທຶນສົມທົບຂອງລັດຖະບານ ສປປລາວ ໃນນາມເຈົ້າຂອງໂຄງການຝ່າຍລາວແມ່ນກົມສົ່ງເສີມ ແລະ ສະຫະກອນກະຊວງກະສິກຳ ແລະ ປ່າໄມ້, ຝ່າຍຫວຽດນາມ ສູນສົ່ງເສີມແຫ່ງຊາດ ກະຊວງກະສິກຳ ແລະ ພັດທະນາຊົນນະບົດຫວຽດນາມ, ມູນຄ່າໂຄງການກໍ່ສ້າງ 44 ຕື້ດົງ ແລະ ທຶນສົມທົບ ຂອງລັດຖະບານລາວ ມູນຄ່າ 1.195 ລ້ານກີບ ໃນການຈັດຕັ້ງປະຕິບັດແຕ່ລະກິດຈະກຳ ພາຍໃນສູນໄດ້ຍົກໃຫ້ເຫັນຂໍ້ສະດວກ, ຂໍ້ຫຍຸ້ງຍາກກ່ຽວກັບການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ.

ຈາກນັ້ນ, ທັງສອງພາກສ່ວນໄດ້ພ້ອມກັນປະກອບຄຳເຫັນແລກປ່ຽນບົດຮຽນນຳກັນ ຢ່າງກົງໄປກົງມາ ແລະ ໄດ້ຮັບຟັງການຊີ້ແຈ້ງບາງບັນຫາຈາກທ່ານໄຈເພັດ ເຮືອງຖາວອນ ຮັກສາການຫົວໜ້າພະແນກກະກຳ ແລະ ປ່າໄມ້ແຂວງຕື່ມອີກ.

ຕອນທ້າຍ, ຍັງໄດ້ຮັບຟັງການໂອ້ລົມຂອງທປະທານກອງປະຊຸມ ໂດຍທ່ານໄດ້ຍ້ອງຍໍຊົມເຊີຍຕໍ່ການນຳຂອງພະແນກກະສິກຳ ແລະ ປ່າໄມ້ແຂວງທີ່ໄດ້ເອົາໃຈໃສ່ນຳພາ-ຊີ້ນຳການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ໂດຍສະເພາະການປະຕິບັດວຽກງານຢູ່ພາຍໃນສູນເຫັນວ່າມີຜົນສຳເລັດຫລາຍດ້ານພ້ອມທັງຮຽກຮ້ອງພະແນກ ແລະ ສູນ ເປັນເຈົ້າການລົງຊຸກຍູ້, ໃຫ້ການຊ່ວຍເຫລືອດ້ານເຕັກນິກການປູກ, ການລ້ຽງແກ່ປະຊາຊົນ, ຈັດຕັ້ງບໍລິຫານກອງທຶນທີ່ມີໃຫ້ເກີດດອກອອກຜົນ, ຊອກຫາວິທີຜະລິດແນວພັນຕ່າງໆ ເພື່ອສະໜອງຕາມຄວາມຮຽກຮ້ອງຕ້ອງການ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງຊອກຕະຫລາດເພື່ອສົ່ງອອກສິນຄ້າກະສິກຳ.

ໂອກາດດຽວກັນນີ້, ຍັງໄດ້ເຄື່ອນໄຫວຢ້ຽມຢາມບັນດາກິດກະກຳຕ່າງໆຂອງສູນຕື່ມອີກ.

(ນັກຂ່າວ ສພຂ ຫົວພັນ)

# ປະທານ ສພຂ ເຊກອງ ໃຫ້ກຳລັງ ແລະ ມອບເຄື່ອງບັນເທົາທຸກໃຫ້ແກ່ປະຊາຊົນ



(ສພຊ) ໃນວັນທີ 13 ຕຸລາ 2022 ທ່ານ ດົງເຜັດ ພະຍົນ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 16, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງດາກຈຶງ ໄດ້ພົບປະ ແລະ ຢ້ຽມຢາມໃຫ້ກຳລັງໃຈ ແລະ ມອບເຄື່ອງອຸປະໂພກ-ບໍລິໂພກຈຳນວນໜຶ່ງ ເພື່ອບັນເທົາທຸກໃຫ້ແກ່ພໍ່ແມ່ປະຊາຊົນບ້ານດາກໂຈມ ເມືອງດາກຈຶງ ແຂວງເຊກອງ ທີ່ໄດ້ຮັບຜົນກະທົບຈາກໄພພິບັດທາງທຳມະຊາດ (ພະຍຸໂນຣູ) ໃນທ້າຍເດືອນກັນຍາຜ່ານມາ.

ທ່ານ ໜູແກ້ວ ອຳນາດການປົກຄອງ ບ້ານ ດາກໂຈມ ໄດ້ລາຍງານສະພາບໂດຍຫຍໍ້ວ່າ: ໃນຕອນເຊົ້າຂອງວັນທີ 28 ເດືອນກັນຍາ ປີ 2022 ທີ່ຜ່ານມາ ໄດ້ເກີດມີຝົນຕົກໜັກ ບວກກັບກະແສລົມພັດແຮງ ເຮັດໃຫ້ເກີດນ້ຳປ່າໄຫຼຊຸ, ນ້ຳຫ້ວຍໂຈມຍົ່ງຂຶ້ນຢ່າງກະທັນຫັນ ເຊິ່ງໄດ້ສິ່ງຜົນກະທົບໂດຍກົງ ແລະ ກໍໃຫ້ເກີດຄວາມເສຍຫາຍຢ່າງໜັກໜ່ວງຕໍ່ປະຊາຊົນພາຍໃນບ້ານ ເປັນຕົ້ນແມ່ນດິນເຊາະເຈື່ອນຖົມເສັ້ນທາງ, ນ້ຳຖ້ວມພື້ນທີ່ຢູ່ອາໃສ, ວັດຖຸສິ່ງຂອງ, ເນື້ອທີ່ທຳການຜະລິດ, ສັດລ້ຽງ, ລະບົບນ້ຳລິນ ແລະ ເຮັດໃຫ້ພໍ່ແມ່ປະຊາຊົນມີຄວາມຫຍຸ້ງຍາກໃນການດຳລົງຊີວິດປະຈຳວັນ ແລະ ຮ້າຍແຮງໄປກວ່ານັ້ນເຮັດໃຫ້ມີປະຊາຊົນຖືກກະແສນ້ຳພັດສູນຫາຍ 1 ຄົນ ເຊິ່ງມາຮອດປັດຈຸບັນກໍຍັງບໍ່ທັນພົບເຫັນເທື່ອ.

ໂອກາດດັ່ງກ່າວ, ທ່ານ ດົງເຜັດ ພະຍົນ ໄດ້ສະແດງຄວາມເສຍໃຈ ແລະ ໃຫ້ກຳລັງໃຈຕໍ່ຄອບຄົວທີ່ໄດ້ຮັບເຄາະຮ້າຍ ພ້ອມທັງຮຽກຮ້ອງຄະນະນຳຂັ້ນເມືອງ-ຂັ້ນບ້ານ ໃຫ້ເພີ່ມທະວີຄວາມເອົາໃຈໃສ່ຕິດຕາມສະພາບອາກາດ ແລະ ຄວາມປອດໄພທາງດ້ານຊີວິດ, ຊັບສິນ ແລະ ສຸຂະພາບຂອງຜູ້ປະສົບໄພ, ພ້ອມທັງເລັ່ງເກັບກຳຂໍ້ມູນຜົນເສຍຫາຍໂດຍໄວ ຮັບປະກັນໄດ້ຄວາມຖືກຕ້ອງຊັດເຈນແລ້ວລາຍງານໃຫ້ຂັ້ນເທິງເປັນລາຍລັກອັກສອນ, ຮຽກຮ້ອງພໍ່ແມ່ປະຊາຊົນພາຍໃນບ້ານຈົ່ງຮັກສາມູນເຊື້ອຄວາມສາມັກຄີຮັກແພງຊ່ວຍເຫຼືອເຊິ່ງກັນ ແລະ ກັນຢ່າງເປັນປົກກະຕິ, ເອົາໃຈໃສ່ເຝົ້າລະວັງພະຍາດຕາມລະດູການ ຄຽງຄູ່ກັບການເຝົ້າຕິດຕາມສະພາບອາກາດຢ່າງເປັນປົກກະຕິ ແລະ ມີສະຕິໃນການໃຊ້ຊີວິດປະຈຳວັນ ເນື່ອງຈາກສະພາບໃນໂລກກໍຄືພາກພື້ນແມ່ນມີການຜັນແປຢູ່ຕະຫລອດເວລາ.

(ນາງ ນາລີວັນ)

108 ສາລະ

# ຫວນຄືນປະຫວັດສາດ

**# ຜູ້ອື່ນ**

ໃນຄໍລຳ 108 ສາລະສະບັບນີ້ ຜູ້ຂຽນນຳເອົາເຫດການສຳຄັນທາງປະຫວັດສາດມານຳສະເໜີໃຫ້ແກ່ບັນທ່ານໄດ້ອ່ານນຳກັນ ເພື່ອເປັນການຫວນຄືນປະຫວັດແຫ່ງໄຊຊະນະການຕໍ່ສູ້ອັນພິລະອາດຫານ ດ້ວຍຄວາມສາມັກຄີ ແລະ ເສຍສະຫລະອັນໃຫຍ່ຫລວງຂອງກອງທັບ ແລະ ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນ ປະຕິວັດລາວ.

ທ້າຍສັດຕະວັດທີ IX ພວກລ່າເມືອງຂຶ້ນຝຣັ່ງໄດ້ເຂົ້າມາຮຸກຮານ ແລະ ຢຶດຄອງເອົາປະເທດລາວເປັນຫົວເມືອງຂຶ້ນ ເຮັດໃຫ້ປະເທດລາວສູນເສຍຄວາມເປັນເອກະລາດ, ປະຊາຊົນຂາດອິດສະຫລະພາບ ກາຍເປັນຂ້ອຍຂ້າມ້າໃຊ້ຂອງຈັກກະພັດຕ່າງດ້າວ ແຕ່ດ້ວຍມູນເຊື້ອບໍ່ຍອມຈຳນົນຂອງປະຊາຊົນລາວບັນດາເຜົ່າ ຈຶ່ງໄດ້ພາກັນລຸກຮື້ຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງເນື່ອງນິດລຽນຕິດ ຍິ່ງພວກເຂົາເພີ່ມທະວີການຢຶດຄອງ ແລະ ປຸກລະດົມຫລາຍຂຶ້ນທໍ່ໃດ ກໍເຮັດໃຫ້ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າຍິ່ງເປີດກວ້າງອອກໄປທຸກຫົນທຸກແຫ່ງໃນຂອບເຂດທົ່ວປະເທດ.

ພາຍຫລັງມະຫາປະຕິວັດເດືອນຕຸລາ ປີ 1917 ໄດ້ຮັບໄຊຊະນະ ແລະ ສະຫະພາບໂຊວຽດໄດ້ເກີດເປັນລັດສັງຄົມນິຍົມທຳອິດຂອງໂລກ ແລະ ໃນປີ 1930 ພັກກອມມູນິດອິນດູຈີນໄດ້ກຳເນີດຂຶ້ນ ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນບັນດາປະເທດໃນອິນດູຈີນມີແນວທາງ ແລະ ມີຍຸດທະສາດອັນຈະແຈ້ງ; ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າໄດ້ກ້າວເຂົ້າສູ່ໄລຍະໃໝ່ ດ້ວຍຄຸນນະພາບອັນໃໝ່ພາຍໃຕ້ການນຳພາ-ຊີ້ນຳຂອງອົງຄະນະພັກແຄວ້ນລາວ ໄດ້ເຕົ້າໂຮມ ແລະ ຈັດຕັ້ງນຳພາປະຊາຊົນ, ບັນດາຊັ້ນຄົນລຸກຮື້ຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງພິລະອາດຫານ, ເນື່ອງນິດລຽນຕິດ ແລະ ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວກວ້າງອອກໄປໃນທົ່ວປະເທດ.

ຕົ້ນປີ 1945 ກອງທັບໂຊວຽດໄດ້ຜາບແພ້ພວກຟາດຊິດເຢຍລະມັນໃນສົງຄາມໂລກຄັ້ງທີ II ແລະ ຢູ່ຫວຽດນາມກໍໄດ້ຮັບໄຊຊະນະໃນການປະຕິວັດເດືອນສິງຫາ ແລະ ປະກາດສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນຫວຽດນາມຂຶ້ນ ໃນວັນທີ 2 ກັນຍາ 1945; ຢູ່ ສປປລາວ ພັກເຮົາໄດ້ເດັດດ່ຽວນຳພາປະຊາຊົນເຮົາລຸກຮື້ຂຶ້ນຕໍ່ສູ້ ໂດຍເລີ່ມຈາກຂະບວນການຕໍ່ສູ້ຂອງກຳມະກອນ ແລະ ການໂຮມຊຸມນຸມໃຫຍ່ ວັນທີ 23 ສິງຫາ 1945 ແລະ ຂະບວນການຢຶດອຳນາດ ກໍໄດ້ແຜ່ລາມໄປຫລາຍແຂວງເປັນຕົ້ນແມ່ນແຂວງສະຫວັນນະເຂດ, ທ່າແຂກ ແຂວງຄຳມ່ວນ, ຊຳເໜືອ ແຂວງຫົວພັນ ແລະ ແຂວງອື່ນໆໃນທົ່ວປະເທດ ອັນເປັນເງື່ອນໄຂໃຫ້ແກ່ການລຸກຮື້ຂຶ້ນຢຶດອຳນາດຈາກພວກລ່າເມືອງຂຶ້ນ ແລະ ປະກາດຄວາມເປັນເອກະລາດແຫ່ງຊາດ.

ວັນທີ 12 ຕຸລາ 1945 ໄດ້ກາຍເປັນເຫດການທີ່ມີຄວາມໝາຍທາງປະຫວັດສາດຂອງຊາດລາວ ເພາະເປັນມື້ທີ່ມີການໂຮມຊຸມນຸມ ທີ່ສະໜາມກິລາແຫ່ງຊາດ (ສະໜາມກິລາເຈົ້າອານຸວົງໃນປັດຈຸບັນ) ເຊິ່ງມີມວນຊົນເຂົ້າຮ່ວມສອງໝື່ນກວ່າຄົນ ໃນມື້ນັ້ນ, ລັດຖະບານລາວອິດສະຫລະໄດ້ເປັນຕົວແທນໃຫ້ແກ່ວົງຄະນະຍາດແຫ່ງຊາດ ປະກາດຄວາມເປັນເອກະລາດຂອງແຜ່ນດິນລາວຕໍ່ໂລກຢ່າງເປັນທາງການ, ປະກາດທ້ອນໂຮມແຜ່ນດິນລາວເປັນເອກະພາບ; ພ້ອມນັ້ນ, ກໍໄດ້ອອກຖະແຫລງການກ່ຽວກັບການປ່ຽນແປງການປົກຄອງ, ລົບລ້າງທຸກໆສັນຍາທີ່ລາວເຊັນກັບຝຣັ່ງ, ປະກາດໃຊ້ທຸງຊາດ ແລະ ປະກາດແຕ່ງຕັ້ງຄະນະລັດຖະບານຊົ່ວຄາວ ໂດຍມີສະເດັດເຈົ້າສຸພານຸວົງ ເປັນລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ຕໍ່ມາດຳລົງຕຳແໜ່ງເປັນຜູ້ບັນຊາການທະຫານສູງສຸດ.

ການປະກາດເອກະລາດໃນວັນທີ 12 ຕຸລາ 1945 ໄດ້ເຮັດໃຫ້ຊາວໂລກຮັບຮູ້ກ່ຽວກັບຄວາມເປັນຊາດລາວ ທັງຮັບຮູ້ຄະນະລັດຖະບານຊົ່ວຄາວຂອງລາວ ແລະ ຮັບຮູ້ວ່າຊາດລາວ-ຄົນລາວ ກໍເປັນຄົນທີ່ມີກຽດສັກສີຄືກັນກັບຊາດອື່ນ ແລະ ຢາກມີອິດສະຫລະພາບ, ເປັນເຈົ້າຊາຕາກຳຂອງຕົນເອງ ແລະ ຢາກມີການພັດທະນາຕົນ ເພື່ອຄວາມຢູ່ດີກິນດີ ແລະ ຄວາມຈະເລີນວັດທະນາ; ດັ່ງນັ້ນ, ວັນທີ 12 ຕຸລາ 1945 ຈຶ່ງເປັນວັນສຳຄັນປະຫວັດສາດຂອງຊາດ ເປັນວັນແຫ່ງຄວາມເອກອ້າງທະນົງໃຈຕໍ່ຄວາມອາດຫານຊານໄຊໃນການຕໍ່ສູ້ບົນຈິດໃຈ "ຍອມຕາຍດີກວ່າເປັນຂ້ອຍຂ້າ, ຕາຍເພື່ອເອກະລາດ ດີກວ່າຢູ່ພາຍໃຕ້ແອກປົກຄອງຂອງຕ່າງຊາດ" ເຊິ່ງໄດ້ກາຍເປັນມູນເຊື້ອແຫ່ງການຕໍ່ສູ້ຢ່າງມີໄຊຂອງຄົນລາວຜູ້ຮັກຊາດພາຍໃຕ້ການນຳພາຂອງພັກ, ສາມາດປົດປ່ອຍຊາດໄດ້ຢ່າງສົມບູນ ແລະ ສະຖາປານາເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ເປັນຕົ້ນມາ.

ສາລາກະວີ

# ດວງໃຈຄູ

**# ໂດຍ: ມ.ດວງມາລາ**

◆ ອາຊີບຄູຄ່າລົ້ນ
ອຸທິດຕົນຖອງເຖິງ
ຊີວິດກາຍໃຈພ້ອມ
ຝາກໃຫ້ອາຊີບນີ້

ອະນັນເນກນາມມະນຸດ
ອາຊີບຄູຝັນໄວ້
ທຸກອິນຊີອານຸພາກ
ນາມຊັ້ນຊື່ວ່າຄູ

◆ ອົດທົນສູ້ເພື່ອໄດ້
ຈຸດປະສົງໝາຍປອງ
ສູ້ເພື່ອຫວັງຜົນໃຫ້
ບັນເລງສອນສັ່ງຊີ້

ເປັນແມ່ພິມສະໝອງ
ສັ່ງສອນວິຊາຮູ້
ສິດຕົນດີເກັ່ງ
ພຽນສ້າງຫລໍ່ຫລອມ

◆ ຊີວິຫວັງມອບມ້ວນ
ຈິດວິນຍານຈັນຍາບັນ
ສິ່ງດີງສັນສ້າງ
ໃຫ້ນັກຮຽນສະຫລາດຮູ້

ໝາຍມອບອຸທິດ
ເພື່ອຄູຄຳນີ້
ປູທາງເດີນໄຕ່
ເຫັນແຈ້ງຊົ່ວດີ

◆ ຊາດນີ້ ຊີວິດນ້ອມ
ອາທອນຫວນແຫນຮັກ
ຊາດໜ້າມີຂໍໃຫ້
ອາຊີບຄູປະເສີດລ້ຳ

ໝາຍມອບການສອນ
ອາຊີບຄູຈິງແທ້
ກາຍກັບມາເກີດ
ມີຂໍປີ້ນປ່ຽນແປງ

◆ ຄວາມຮັກແພງຜູກໝັ້ນ
ຄືກະໂປະກັບຄັນ
ຄັນກະບວຍບໍ່ມີດ້າມ
ເຂົາຊິເອີ້ນໂປະໝາກພ້າວ

ສິດຄູ່ຄຽງຄູ
ຕໍ່ກັນເປັນບວຍໃຊ້
ຊິເອົາຫຍັງຄ້າງແອ່ງ
ບໍ່ມີເອີ້ນວ່າກະບວຍ ດອກນາ!



ສຸຂະສາບາຍທາຍໂຣຄ

# ພະຍາດທີ່ມັກເກີດກັບພະນັກງານຫ້ອງການ

**ແປ ແລະ ຮຽບຮຽງໂດຍ: ສາວແອ່ນ**



**1. ໄມເກນ:** ເຄີຍຮູ້ສຶກບໍວ່າເວລານັ່ງເຮັດວຽກໜັກໆມັກຈະຮູ້ສຶກປວດຫົວ ຕຸບໆ..... ຢູ່ບໍລິເວນຂະມັບ, ດ້ານໜ້າ ຫລື ງ່ອນ ນັ້ນຄືສັນຍານເຕືອນໃຫ້ທ່ານຮູ້ລ່ວງໜ້າວ່າ ມີຄວາມສ່ຽງຕໍ່ການເປັນໄມເກນ ເຊິ່ງສາເຫດຕົ້ນຕໍແມ່ນເກີດຈາກການຫົດຂອງກ້າມຊີ້ນຢູ່ໃນບໍລິເວນບ່າ ແລະ ຄໍ ຈົນຈັບໂຕເປັນກ້ອນ ແລ້ວໄປທັບເສັ້ນເລືອດທີ່ນຳເອົາອົກຊີແຊນໄປລ້ຽງພາກສ່ວນຫົວ ເຮັດໃຫ້ເສັ້ນເລືອດຂະຫຍາຍຜິດປົກກະຕິ ເຮັດໃຫ້ເລືອດ ແລະ ອົກຊີແຊນ ໄປລ້ຽງສະໝອງບໍ່ພຽງພໍ ພາໃຫ້ເກີດອາການເຈັບຫົວຫົວ; ນອກນັ້ນ, ແສງແດດ, ຄວາມຮ້ອນ, ການພັກຜ່ອນບໍ່ພຽງພໍ ແລະ ການຂາດຮໍໂມນບາງຊະນິດ ກໍອາດເປັນປັດໄຈກະຕຸ້ນອາການເຈັບໄມເກນໄດ້ເຊັ່ນດຽວກັນ.

**2. ຄວາມບໍ່ສົມດຸນຂອງຮ່າງກາຍ:** ຮ່າງກາຍຂອງມະນຸດຖືກອອກແບບ ເພື່ອຮອງຮັບການລົບກວນຕ່າງໆຈາກສິ່ງແວດລ້ອມ ທັງກຳຈັດ ແລະ ປັບລະບົບ ໃຫ້ສາມາດເຮັດວຽກໄດ້ຢ່າງເປັນປົກກະຕິ ມີປະສິດທິຜົນສູງສຸດ ໂດຍມີສະໝອງເປັນສູນກາງໃນການເຮັດວຽກຂອງຮ່າງກາຍ; ສະໝອງຈະເຮັດໜ້າທີ່ອອກຄຳສັ່ງ ແລະ ສົ່ງຄຳສັ່ງນັ້ນໄປຫາອະໄວຍະວະຕ່າງໆໃນຮ່າງກາຍ ລວມທັງກ້າມຊີ້ນ ແລະ ຄໍ່ຕໍ່ຕ່າງໆ ເຊິ່ງລະບົບຮາກເສັ້ນປະສາດທັງໝົດອອກມາຕາມກະດູກສັນຫລັງ ແຕ່ຖ້າກະດູກສັນຫລັງບໍ່ສົມດຸນ ບໍ່ຢູ່ໃນເສັ້ນໂຄ້ງປົກກະຕິ ເຊັ່ນ ຄົດ, ງໍ.... ເຊິ່ງສາເຫດສ່ວນຫລາຍແມ່ນເກີດຈາກວິທີການນັ່ງເຮັດວຽກທີ່ບໍ່ຖືກຕ້ອງ ຫລື ເຮັດວຽກໃນທ່າເດີມແບບຊ້ຳໆ ຈະເຮັດໃຫ້ຮ່າງກາຍເຈັບປວດໃນຮູບແບບຕ່າງໆເຊັ່ນ: ເຈັບຫລັງຊຳເຮື້ອ, ເຈັບກ້ານຄໍ, ປວດຮາກ ຫລື ແຂນຂາອ່ອນໆ ແລະອື່ນໆ ໃນເບື້ອງຕົ້ນມັນອາດຈະບໍ່ສະແດງໃຫ້ເຫັນຜົນຢ່າງຊັດເຈນ ແຕ່ຖ້າລະເລີຍອາດສົ່ງຜົນຈະຮ້າຍແຮງເຖິງຂັ້ນປວດເສັ້ນປະສາດ, ເປັນອຳມະພາດ ແລະ ລະບົບເຮັດວຽກຂອງອະໄວຍະວະຜິດປົກກະຕິໄດ້ເຊັ່ນດຽວກັນ

**3. ກະດູກສັນຫລັງຄົດງໍ**

ປັດຈຸບັນການເຮັດວຽກໃນຫ້ອງການ ໃຊ້ເວລາເກືອບ 8 ຊົ່ວໂມງຕໍ່ມື້ ຢູ່ກັບໜ້າຈໍຄອມພິວເຕີ, ໃສ່ເກີບສົ້ນສູງ ແລະ ທ່ານັ່ງເດີມໆ; ທ່ານເຄີຍສັງເກດບໍ່ວ່າ ຮ່າງກາຍສະສົມຄວາມເມື່ອຍລ້າໄວ້ຫລາຍປານໃດ ແລະ ເປັນສາເຫດເບື້ອງຕົ້ນຂອງອາການເຈັບຫລັງຊຳເຮື້ອ? ໂດຍສະເລ່ຍແລ້ວ 80% ມັກຈະມີອາການປວດຫລັງຢ່າງນ້ອຍໜຶ່ງຄັ້ງໃນຊີວິດ ແລະ ຫລາຍກວ່າ 20% ມີປະສົບການອາການເຈັບຫລັງຊຳເຮື້ອຈາກ "ກະດູກສັນຫລັງຄົດງໍ"

**4. ເປືອກຫຸ້ມຂໍ້ມືອັກເສບ**

ເປັນໄພຂົ່ມຂູ່ງຽບທີ່ຫລີກລ່ຽງບໍ່ໄດ້ ໃນຜູ້ທີ່ຕ້ອງນັ່ງເຮັດວຽກຢູ່ກັບຄອມພິວເຕີເປັນເວລາດົນ ເປືອກຫຸ້ມຂໍ້ມືອັກເສບສ່ວນໃຫຍ່ແມ່ນເກີດການນຳໃຊ້ຂໍ້ມືເພື່ອຈັບສິ່ງຕ່າງໆ ຫລື ເມົ້າຄອມພິວເຕີ ໃນທ່າເກົ່າເປັນເວລາດົນ ເຮັດໃຫ້ກ້າມຊີ້ນທັບເສັ້ນປະສາດ ແລະ ເສັ້ນເອັນ ຈົນເຮັດໃຫ້ເກີດການອັກເສບ ແລະ ມີເຍື່ອຫຸ້ມບໍລິເວນນັ້ນຫລາຍກວ່າປົກກະຕິ ຫລືອາດເກີດຈາກການເຄື່ອນໄຫວຂອງເສັ້ນປະສາດທີ່ສົ່ງສັນຍານຜ່ານແຂນ ຈາກແຂນສອກໄປຫາຂໍ້ມືຫລາຍຄັ້ງ ເຮັດໃຫ້ເກີດຄວາມເຈັບປວດປາຍເສັ້ນປະສາດ ຫລື ເສັ້ນເອັນຢູ່ບໍລິເວນກົກຄໍເກີດການອັກເສບນັ້ນ ກໍເກີດມາຈາກສາເຫດດຽວກັນ.

**5. ຫູດັບ "ປະສາດຫູເສື່ອມ"**

ເປັນໄພຂົ່ມຂູ່ອີກອັນໜຶ່ງທີ່ຄວນຮູ້ ກ່ຽວກັບບັນຫາຫູດັບ ຫລື ພະຍາດປະສາດຫູເສື່ອມ ສ່ວນຫລາຍແມ່ນເກີດຈາກຫລາຍປັດໄຈເຊັ່ນ: ກຳມະພັນ, ພະຍາດບາງຊະນິດ ຫລື ປັດໄຈຈາກສະພາບແວດລ້ອມພາຍນອກທີ່ເຮັດໃຫ້ລະດັບການໄດ້ຍິນຫລຸດລົງປົກກະຕິແລ້ວເສັ້ນປະສາດຫູຈະເລີ່ມຊຸດໂຊມລົງເທື່ອລະໜ້ອຍ ໃນລະຫວ່າງອາຍຸປະມານ 30-50 ປີ; ອາການເບື້ອງຕົ້ນຈະຮູ້ສຶກວ່າການໄດ້ຍິນຫລຸດລົງ ບໍ່ຊັດເຈນ ຕ້ອງຟັງຢ່າງລະມັດລະວັງ ຫລື ຕ້ອງໃຫ້ຄູ່ສົນທະນາທວນຄືນເລື້ອຍໆ ຖ້າມີອາການເຫລົ່ານີ້ຄວນປຶກສາແພດຜູ້ຊ່ຽວຊານ ເພື່ອກວດຫາສາເຫດຂອງຄວາມບົກຜ່ອງທາງດ້ານການໄດ້ຍິນ ແລະ ປິ່ນປົວໂດຍໄວ.

**www.sanook.com**

# ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ພາກທີ VIII**

**ຂໍ້ຫ້າມ**

**ມາດຕາ 42 (ປັບປຸງ) ຂໍ້ຫ້າມທົ່ວໄປຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:**

1. ດຳເນີນທຸລະກິດໂທລະຄົມມະນາຄົມປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຊັບພະຍາກອນ, ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ນຳໃຊ້ການບໍລິການໂທລະຄົມມະນາຄົມ ໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ;
4. ໃຊ້ອຸປະກອນໂທລະຄົມມະນາຄົມ ເພື່ອລົບກວນ, ທຳລາຍ, ລັກຕໍ່, ລັກຟັງ ແລະ ກັ່ນຕອງ ເອົາຂໍ້ມູນ ຂ່າວສານ ຂອງຜູ້ອື່ນ;
5. ທຳລາຍອຸປະກອນໂທລະຄົມມະນາຄົມ ຂອງບຸກຄົນ ຫຼື ຜູ້ໃຫ້ບໍລິການໂທລະຄົມມະ ນາຄົມ;
6. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 43 (ປັບປຸງ) ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຫ້າມ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີພຶດຕິກຳ ດັ່ງນີ້:

1. ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຊັບພະຍາກອນ, ນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມ ໂດຍບໍ່ຖືກຕ້ອງຕາມການອະນຸຍາດ;
3. ນຳເຂົ້າ ແລະ ເປີດໃຫ້ບໍລິການ ເຕັກໂນໂລຊີໃໝ່ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;
4. ເຊື່ອມຕໍ່ກັບເຄືອຂ່າຍໂທລະຄົມມະນາຄົມອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
5. ມີການກະທຳໃດໜຶ່ງ ທີ່ເປັນການແຂ່ງຂັນໂທລະຄົມມະນາຄົມ ທີ່ບໍ່ເປັນທຳ;
6. ໂຈະ ຫຼື ຍົກເລີກການໃຫ້ບໍລິການ ໂດຍບໍ່ແຈ້ງ ຫຼື ກ່າວເຕືອນລ່ວງໜ້າໃຫ້ຜູ້ໃຊ້ບໍລິ ການ, ຍົກເວັ້ນການ ໂຈະ ຫຼື ຍົກເລີກ ເພື່ອຄວາມໝັ້ນຄົງຂອງຊາດ;
7. ເປີດນຳໃຊ້ບໍລິການໃດໜຶ່ງ ໃຫ້ຜູ້ໃຊ້ບໍລິການໂດຍທີ່ບໍ່ໄດ້ລົງທະບຽນນຳໃຊ້;
8. ເປີດເຜີຍຂໍ້ມູນທາງລັດຖະການ ແລະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
9. ຂຶ້ນ ຫຼື ຫຼຸດ ຄ່າບໍລິການ ໂດຍບໍ່ໄດ້ຮັບອະນຸຍາດຈາກກະຊວງເຕັກໂນຊີ ແລະ ການສື່ສານ;
10. ໂຄສະນາເກີນຄວາມເປັນຈິງ, ທັບຖົມບຸກຄົນ ຫຼື ນິຕິບຸກຄົນອື່ນ, ເຜີຍແຜ່ສິ່ງລາມົກອະນາຈານ, ສິ່ງເສີມການພະນັນ;
11. ທຳລາຍອຸປະກອນໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການອື່ນ, ທຳລາຍສິ່ງແວດລ້ອມ ແລະ ທິວທັດທຳມະຊາດ;
12. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 44 (ປັບປຸງ) ຂໍ້ຫ້າມສຳລັບຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

ຫ້າມ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ການບໍລິການໂທລະຄົມມະນາຄົມ ໃນທາງທີ່ບໍ່ຖືກຕ້ອງຕາມກົດໝາຍ;
2. ບໍ່ປະຕິບັດຕາມເງື່ອນໄຂຂອງການນຳໃຊ້ ຕາມສັນຍາບໍລິການ;
3. ນຳໃຊ້ເລກໝາຍໂທລະສັບ ໂດຍບໍ່ຂຶ້ນທະບຽນ;
4. ຊຳລະຄ່າບໍລິການບໍ່ຖືກຕ້ອງ ແລະ ຄົບຖ້ວນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 45 (ປັບປຸງ) ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຄວາມລັບທາງລັດຖະການ, ກົດໜ່ວງຖ່ວງດຶງ ແລະ ປອມແປງເອກະສານ ກ່ຽວກັບໂທລະຄົມມະນາຄົມ;
2. ສວຍໃຊ້ອຳນາດໜ້າທີ່ ຕຳແໜ່ງ ເພື່ອຜົນປະໂຫຍດຂອງຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ລວມໝູ່ ຫຼື ສັງຄົມ ແລະ ການຈັດຕັ້ງ;
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບທີ່ການຈັດຕັ້ງມອບໝາຍໃຫ້;
4. ດຳເນີນທຸລະກິດໂທລະຄົມມະນາຄົມ;
5. ດຳລົງຕຳແໜ່ງໃດໜຶ່ງ ຫຼື ເປັນທີ່ປຶກສາໃຫ້ຜູ້ບໍລິການໂທລະຄົມມະນາຄົມ, ຍົກເວັ້ນ ຜູ້ໄດ້ຮັບການແຕ່ງຕັ້ງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ພາກທີ IX**

**ການຄຸ້ມຄອງ ແລະ ການກວດກາວຽກງານໂທລະຄົມມະນາຄົມ**

**ໝວດທີ 1**

**ການຄຸ້ມຄອງວຽກງານໂທລະຄົມມະນາຄົມ**

**ມາດຕາ 46 (ປັບປຸງ) ອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານໂທລະຄົມມະນາຄົມ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ອົງການຄຸ້ມຄອງວຽກງານໂທລະຄົມມະນາຄົມ ປະກອບດ້ວຍ:

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ;
3. ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 47 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ.**

ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຄົ້ນຄວ້າຮ່າງນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ຄົ້ນຄວ້າ ຫັນເອົາ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດ ທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນໃນຂອບເຂດທົ່ວປະເທດ;
3. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;
4. ຄຸ້ມຄອງ ແລະ ນຳໃຊ້ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ໃຫ້ຖືກຕ້ອງຕາມລະບຽບການ;
5. ຄຸ້ມຄອງ ແລະ ດັດສົມ ເຄືອຂ່າຍໂທລະຄົມມະນາຄົມ, ອັດຕາ ຄ່າທຳນຽມ ແລະ ຄ່າບໍລິການ ພ້ອມທັງຊຸກຍູ້ຜູ້ໃຫ້ບໍລິການໂທລະຄົມມະນາຄົມໃຫ້ຂະຫຍາຍເຄືອຂ່າຍການບໍລິການຢ່າງທົ່ວເຖິງ ແລະ ລົງສູ່ເຂດຫ່າງໄກສອກຫຼີກ ຫຼື ເຂດບຸລິມະສິດຂອງລັດຖະບານ;
6. ຄົ້ນຄວ້າ ສ້າງ ແລະ ກຳນົດມາດຕະຖານເຕັກນິກ, ກວດກາ, ຢັ້ງຢືນຄຸນນະພາບ ອຸປະກອນ ແລະ ການບໍລິການ ໂທລະຄົມມະນາຄົມ;
7. ຄຸ້ມຄອງ, ພັດທະນາ, ຈັດສັນ, ຕິດຕາມ ແລະ ກວດກາ ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຢ່າງມີປະສິດທິພາບ ໃຫ້ສອດຄ່ອງກັບກົດໝາຍ, ລະບຽບການ ແລະ ສົນທິສັນຍາທີ່ ສປປລາວ ເປັນພາຄີ;
8. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ;
9. ອອກໃບຢັ້ງຢືນ ແຜນນຳເຂົ້າ ແລະ ສົ່ງອອກ ອຸປະກອນໂທລະຄົມມະນາຄົມປະຈຳປີ ແລະ ໃບອະນຸຍາດນຳເຂົ້າ ແລະ ສົ່ງອອກອຸປະກອນໂທລະຄົມມະນາຄົມ;
10. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໂທລະຄົມມະນາຄົມຕ່າງໆ ຕາມລະບຽບການ;
11. ເກັບກຳຂໍ້ມູນສະຖິຕິ ຜູ້ໃຫ້ ແລະ ຜູ້ໃຊ້ ບໍລິການໂທລະຄົມມະນາຄົມ ໃນຂອບເຂດທົ່ວປະເທດ;
12. ແກ້ໄຂຄຳສະເໜີ ຫຼື ຂໍ້ຂັດແຍ່ງ ກ່ຽວກັບຄຸນນະພາບ, ມາດຕະຖານ ຂອງການບໍລິ ການໂທລະຄົມມະນາຄົມ;
13. ນຳໃຊ້ຊັບພະຍາກອນ ແລະ ໂຄງລ່າງພື້ນຖານໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການ ໃນກໍລະນີຈຳເປັນ ເຊັ່ນ ຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານໄພພິບັດ ແລະ ວຽກງານບຸລິມະສິດ ຂອງລັດຖະບານ;
14. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ;
15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານໂທລະຄົມມະນາຄົມ;
16. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານໂທລະຄົມມະນາຄົມຕໍ່ລັດຖະບານ ຢ່າງເປັນປົກກະຕິ;
17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 48 (ປັບປຸງ) ສິດ ແລະ ໜ້າທີ່ ຂອງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ ພະແນກເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານໂທລະຄົມມະນາຄົມ;
2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນພັດ ທະນາ ກ່ຽວກັບວຽກງານໂທລະຄົມມະນາຄົມໃຫ້ສັງຄົມຮັບຮູ້;
3. ອອກ, ຕໍ່, ໂຈະ ຫຼື ຍົກເລີກ ໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ;
4. ກວດກາ, ຢັ້ງຢືນ ຄຸນນະພາບ ອຸປະກອນ ແລະ ການບໍລິການ ໂທ

ອ່ານຕໍ່ສະບັບໜ້າ...




## ກົນອຸບາຍ ແລະ ເລ້ຫລ່ຽມ

ໂດຍ: ທິດດີ

ໜັງສືພິມ ຜູ້ແທນປະຊາຊົນ ສະບັບແລ້ວ, ໄດ້ລົງພິມບົດໃນຄໍລຳ ສາລະພັດບັນຫາ ໃນຫົວຂໍ້: "ຊອກຮູ້ຍຸດທະສາດຫັນປ່ຽນໂດຍສັນຕິ", ມີເພື່ອນຜູ້ອ່ານໜັງສືພິມແຈ້ງເຂົ້າມາວ່າ: ຢາກໃຫ້ຊອກຂໍ້ມູນກ່ຽວກັບ ກົນອຸບາຍ ແລະ ເລ້ຫຼ່ຽມຂອງຍຸດທະສາດນີ້ ມາລົງພິມຕື່ມແດ່ວ່າຊັ້ນ!.

ຜູ້ຂຽນໄດ້ຊອກຄົ້ນຈາກເອກະສານພາຍໃນ ແລະ ຈາກປະເທດເພື່ອນມິດຍຸດທະສາດ ເຊິ່ງພໍສັງລວມໄດ້ບາງບັນຫາດັ່ງນີ້:

**ໜຶ່ງ:** ເດັດຂາດນຳໃຊ້ເຄືອຂ່າຍອິນເຕີເນັດ-ສື່ອອນລາຍ ເພື່ອໂຄສະນາແຊກຊຶມບັນດາທັດສະນະທີ່ບໍ່ຖືກຕ້ອງ ຜິດພາດ; ປໍລະປັກ ບຸກໂຈມຕີ ເຂົ້າບັນດາປະເທດທີ່ບໍ່ເດີນຕາມເສັ້ນທາງຕາເວັນຕົກ.

**ສອງ:** ແມ່ນນຳໃຊ້ບັນຫາປະຊາທິປະໄຕ; ສິດທິມະນຸດ ເພື່ອຕ້ານກັບບັນດາປະເທດທີ່ບໍ່ຍອມຂຶ້ນຕໍ່ຕາເວັນຕົກ.

**ສາມ:** ຍຸຍົງ ແລະ ຊຸກຍູ້ ພາຍໃນເຮັດໃຫ້ມີການ "ຫັນປ່ຽນພາຍໃນຕົນເອງ"; ຜັນແປດ້ວຍຕົນເອງ.

**ສີ່:** ຍຸຍົງຫັນເປັນເອກະຊົນຢ່າງເຖິງກົກເຖິງຮາກຕໍ່ພື້ນຖານເສດຖະກິດ; ລົບລ້າງເສດຖະກິດແຫ່ງຊາດ ແນໃສ່ເຮັດໃຫ້ກາຍເປັນ ແລະ ພັດທະນາເປັນຊົນຊັ້ນນາຍທຶນ ເຊິ່ງຕົກຢູ່ໃນກົນອຸບາຍຂອງນາຍທຶນ"...ຊ່ວຍຊຸກຍູ້ການລົງທຶນ ແລະ ຍຶດຄອງຕະຫລາດ...".

**ຫ້າ:** ເພີ່ມທະວີວຽກງານການຕ່າງປະເທດ ໃກ້ສິດຕິດແທດ; ແກ່ດຶງ ແລະ ຊື້ຈ້າງຈອບອອຍເອົາພະນັກງານຫລັກແຫລ່ງໃນອົງການຂັ້ນສູນກາງ; ຂັ້ນແຂວງ ແນໃສ່ຈຸດປະສົງສ້າງໃຫ້ນິຍົມຕາເວັນຕົກ; ຫວັງນຳໃຊ້ພະນັກງານເຫລົ່ານີ້ຄ່ອຍໆຫັນປ່ຽນແນວທາງ; ນະໂຍບາຍຂອງພັກ-ລັດ ໄປຕາມລັດທິທຶນນິຍົມ.

**ຫົກ:** ໃຫ້ການຮ່ວມມື; ກໍ່ສ້າງ ແລະ ກ້າວໄປສູ່ການສ້າງຕັ້ງຊັ້ນຄົນປັນຍາຊົນທີ່ນິຍົມຕາເວັນຕົກ; ສ້າງເງື່ອນໄຂເພື່ອໃຫ້ຈຳນວນຄົນເຫລົ່ານີ້ຊຶມເລິກເຂົ້າພາຍໃນ; ຊັກຈູງແກ່ດຶງ ແລະ ຄ່ອຍໆຫັນປ່ຽນລະບອບສັງຄົມນິຍົມ (ກົນອຸບາຍນີ້ໄດ້ຮັບຜົນສຳເລັດຢູ່ສະຫະພາບໂຊວຽດ; ນັ້ນແມ່ນກໍລະນີ ກອກບາຊອບ ຜູ້ນຳເວລານັ້ນ).

**ເຈັດ:** ດຳເນີນການຄົບຊຸດລະຫວ່າງ "...ຫັນປ່ຽນໂດຍສັນຕິ ກັບການຍຸຍົງປັ່ນປ່ວນໂຄ່ນລົ້ມ; ໂດຍນຳໃຊ້ຂໍ້ຂັດແຍ່ງຂອງຊົນເຜົ່າ; ສາສະໜາເພື່ອແບ່ງແຍກ; ຍຸຍົງທ່າອ່ຽງແຍກຕົວ; ແຍກຄົນເພື່ອສ້າງເງື່ອນໄຂໃຫ້ມີການປະທະກັນ ລະຫວ່າງຊົນເຜົ່າ; ສາສະໜາ; ຫັນເປັນ "ຈຸດຮ້ອນ" ກ້າວຂຶ້ນໃຊ້ກຳລັງທະຫານບຸກເຂົ້າສົມທົບກັບດ້ານການເມືອງພັກຝ່າຍຄ້ານຕ້ານພັກ-ລັດ; ຕ້ານລະບອບສັງຄົມນິຍົມ.

**ແປດ:** ສວຍໃຊ້; ລ້ຽງເກືອບັນດາຄົນທຸງ; ສວຍໂອກາດດ້ານການເມືອງທີ່ເປັນປະຕິການພາຍໃນ ແນໃສ່ເຕົ້າໂຮມກຳລັງໃຫ້ກາຍເປັນການຈັດຕັ້ງການເມືອງ ລໍໂອກາດເພື່ອລົງສູ່ສະໜາມການເມືອງ.

ທັງໝົດນັ້ນ, ຄືບາງຂໍ້ມູນທີ່ຜູ້ຂຽນຊອກຫາມາໄດ້ ເພື່ອສະໜອງໃຫ້ແກ່ເພື່ອນຜູ້ອ່ານໜັງສືພິມພວກເຮົາໄດ້ຮັບຊາບ.

# ສະມັດຊາໃຫຍ່ອົງການ ສປຊ ໄດ້ເລືອກຕັ້ງ 14 ປະເທດສະມາຊິກຂອງສະພາສິດທິມະນຸດ

**ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ**

ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ວັນທີ 11 ຕຸລາ 2022 ສະມັດຊາໃຫຍ່ອົງການສະຫະປະຊາຊາດ (ສປຊ) ຄັ້ງທີ 77 ໄດ້ຈັດກອງປະຊຸມຄົບຄະນະ ໂດຍໄດ້ເລືອກຕັ້ງ 14 ປະເທດສະມາຊິກໃໝ່ຂອງສະພາສິດທິມະນຸດ ເພື່ອເຂົ້າແທນສະມາຊິກທີ່ຈະໝົດອາຍຸປະຕິບັດໜ້າທີ່ໃນທ້າຍປີ 2022 ໂດຍສະມາຊິກໃໝ່ດັ່ງກ່າວຈະຮັບຕຳແໜ່ງໃນວັນທີ 1 ມັງກອນ 2023.

ສະມາຊິກຂອງສະພາສິດທິມະນຸດທີ່ໄດ້ຮັບການເລືອກຕັ້ງໃນຄັ້ງນີ້ ມີປະເທດຢູ່ພາກພື້ນອາຟຣິກາ ຄື: ອານເຊຣີ, ມາຣົກ, ອາຟຣິກາໃຕ້ ແລະ ຊູດັງ; ປະເທດຢູ່ພາກພື້ນອາຊີ-ປາຊີຟິກ ຄື: ບັງກະລາເດັດ, ກຽກກິສະຖານ, ມານດິຟ ແລະ ຫວຽດນາມ; ປະເທດຢູ່ພາກພື້ນເອີຣົບຕາເວັນອອກ ຄື: ກີໂອເກຍ ແລະ ຣູມານີ; ປະເທດຢູ່ພາກພື້ນອາເມຣິກາລາຕິນແລະກາຣິບບຽນ ຄື: ຈີເລ ແລະ ໂກສຕາຣິກາ; ປະເທດເອີຣົບຕາເວັນຕົກແລະປະເທດຢູ່ພາກພື້ນອື່ນໆ ຄື: ແບນຊິກ ແລະ ເຢຍລະມັນ. ໃນນັ້ນ, ຊູດັງ ແລະ ເຢຍລະມັນ ເປັນສະມາຊິກທີ່ຈະດຳລົງຕຳແໜ່ງຕໍ່ໄປອີກ.

ສຳນັກງານໃຫຍ່ສະພາສິດທິມະນຸດ ສປຊ ຕັ້ງຢູ່ເຊີແນວປະເທດສະວິດ ເຊິ່ງສະພາສິດທິມະນຸດໄດ້ຈັດບ່ອນນັ່ງ 47 ບ່ອນນັ່ງ ໃນນັ້ນ, ພາກພື້ນອາຊີ-ປາຊີຟິກ ແລະ ພາກພື້ນອາຟຣິກາແມ່ນມີ 13 ບ່ອນນັ່ງ, ອາເມຣິກາລາຕິນ ແລະ ພາກພື້ນກາຣິບບີມີ 8 ບ່ອນນັ່ງ, ພາກພື້ນເອີຣົບຕາເວັນອອກມີ 6 ບ່ອນນັ່ງ, ເອີຣົບຕາເວັນຕົກ ແລະ ພາກພື້ນອື່ນໆມີ 7 ບ່ອນນັ່ງ.

ໃນແຕ່ລະປີ, ສະມັດຊາໃຫຍ່ ສປຊ ຈະເລືອກຕັ້ງສະມາຊິກໃໝ່ໃນ 1 ສ່ວນ 3 ຂອງສະມາຊິກ, ສະມາຊິກມີອາຍຸດຳລົງຕຳແໜ່ງເປັນເວລາ 3 ປີ ແລະ ສາມາດດຳລົງຕຳແໜ່ງຕໍ່ອີກ 1 ສະໄໝເມື່ອໄດ້ຮັບການເລືອກຕັ້ງ.

**ແຫລ່ງຂ່າວ: CRI**




# ນູແວນເຊລັງ ສະເໜີເກັບຄ່າປ່ອຍມົນລະພິດໃນຂົງເຂດກະສິກຳ

**ແປ ແລະ ຮຽບຮຽງ: ທະນາກອນ**



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ທ່ານ ຈາຊິນດາ ອາຣເດີນ ນາຍົກລັດຖະມົນຕີນູແວນເຊລັງ ລະບຸວ່າ: ລັດຖະບານນູແວນເຊລັງ ໄດ້ເຜີຍແຜ່ຂໍ້ສະເໜີ ແນໃສ່ຫລຸດຜ່ອນການປ່ອຍມົນລະພິດທາງກະສິກຳ ເພື່ອສົ່ງເສີມຂໍ້ໄດ້ປຽບໃນການແຂ່ງຂັນຢູ່ຕະຫລາດໂລກທີ່ເປັນມິດຕໍ່ສິ່ງແວດລ້ອມ.

ຂໍ້ສະເໜີດັ່ງກ່າວ ຈະຊຸກຍູ້ນູແວນເຊລັງ ໃຫ້ມຸ່ງໄປສູ່ເຂົ້າເປົ້າໝາຍການຫລຸດຜ່ອນແກັສມີເທນ ພາຍໃຕ້ກົດໝາຍການປ່ອຍກາກບອນໃຫ້ເປັນສູນ ໃນປີ 2030 (Zero Carbon Act 2030). ໃນຂະນະດຽວກັນ, ລັດຖະບານ ໄດ້ຮວບຮວມຄຳແນະນຳຈຳນວນຫລວງຫລາຍຈາກກຸ່ມພາກກະສິກຳ ເພື່ອນຳມາກຳນົດລາຄາການປ່ອຍມົນລະພິດລະດັບຟາມ ແລະ ສະເໜີການປັບປຸງຂໍ້ສະເໜີນີ້ ຕາມຄຳແນະນຳຂອງຄະນະກຳມະການດ້ານການປ່ຽນແປງສະພາບພູມອາກາດ.

ນີ້ຖືເປັນບາດກ້າວທີ່ສຳຄັນໃນການປ່ຽນຜ່ານສູ່ອະນາຄົດ ກ່ຽວກັບການປ່ອຍມົນລະພິດຕ່ຳ ແລະ ເປັນໄປຕາມຄຳສັນຍາກຳນົດລາຄາການປ່ອຍມົນລະພິດທາງດ້ານການກະສິກຳຕັ້ງແຕ່ປີ 2025, ເພື່ອໃຫ້ຊາວກະສິກອນນູແວນເຊລັງ ສາມາດຄວບຄຸມລະບົບການເຮັດວຽກໃນຟາມ ແນໃສ່ຫລຸດຜ່ອນຕົ້ນທຶນ ຜ່ານລາຍໄດ້ຈາກລະບົບໝູນວຽນ ກັບຄືນສູ່ຊາວກະສິກອນ ເຊິ່ງລະບົບນີ້ ຈະມອບທຶນສະໜັບສະໜູນດ້ານການວິໄຈ ເຄື່ອງມືເຕັກໂນໂລຊີ ແລະ ນະໂຍບາຍດຶງດູດ ເພື່ອຫລຸດຜ່ອນການປ່ອຍມົນລະພິດອີກດ້ວຍ.

**ແຫລ່ງຂ່າວ: Xinhua**







ທະນາຄານພັດທະນາລາວ
LDB Bank

ທະນາຄານພົງສະຫວັນ
Phongsavanh BANK




| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສີງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ | ທ່ານ ນາງ ກົງໃຈ ແສງອຳພັນ | ທ່ານ ນາງ ກຸກກິກ ບຸດດາໄຊ |
| | ທ່ານ ວິເສດ ສະແຫວງສຶກສາ | ທ່ານ ຂັນທະວີ ວົງພະຈັນ | ທ່ານ ນາງ ສຸພາວັນ ທອມສະນິດ | ທ່ານ ສົມນຶກ ແກ້ວໄຊຍະຈັກ |
| | ທ່ານ ຄຳວິສັນ ແກ້ວສຸວັນ | | ທ່ານ ນາງ ປາກາລັກ ພົມມີໄຊ | |